ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

21- 27 ເມສາ 2023

ປີທີ 12 ສະບັບທີ 919

ລາຍສັປປະດາ

## ປະທານສະພາແຫ່ງຊາດ ໃຫ້ທິດຊີ້ນຳກອງປະຊຸມໃຫຍ່ຜູ້ພິພາກສາ ທົ່ວປະເທດ ຄັ້ງທີ XI





(ສພຊ) ວັນທີ 29 ມີນາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ ທົ່ວປະເທດ ຄັ້ງທີ XI ເຊິ່ງທ່ານໄດ້ໃຫ້ທິດຊີ້ນຳ 8 ຂໍ້ດັ່ງນີ້:

1. ຕ້ອງເຂົ້າໃຈ ແລະ ກຳແໜ້ນໃນແນວທາງການສ້າງລັດທີ່ປົກຄອງດ້ວຍກົດໝາຍຢູ່ ສປປລາວ ໃຫ້ຖືກຕ້ອງ, ເລີກເຊິ່ງຕາມທີ່ກອງປະຊຸມໃຫຍ່ຂອງພັກວາງອອກ ໂດຍຢຶດໝັ້ນຫຼັກການທີ່ວ່າ ພັກນຳພາ ແລະ ກຳອຳນາດຕາມກົດໝາຍ, ລັດຄຸ້ມຄອງສັງຄົມດ້ວຍກົດໝາຍ, ປະຊາຊົນໃຊ້ສິດເປັນເຈົ້າ ສະເໝີພາບຕໍ່ໜ້າກົດໝາຍ ຈຸດໝາຍແຫ່ງການສ້າງລັດ ທີ່ປົກຄອງດ້ວຍກົດໝາຍຂອງພັກ ແມ່ນເພື່ອບັນລຸການສ້າງໃຫ້ລັດ ປະຊາທິປະໄຕ ປະຊາຊົນ ປະຕິບັດອຳນາດລັດ ຢ່າງຖືກຕ້ອງຕາມກົດໝາຍ ທັງສາມາດຮັບປະກັນຄວາມສັກສິດຂອງກົດໝາຍໄດ້ເປັນຢ່າງດີ ແລະ ທັງສາມາດຮັບປະກັນສິດເປັນເຈົ້າ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນໄດ້ຢ່າງຄົບຖ້ວນ ຈຶ່ງແມ່ນການສະແດງອອກຢ່າງເດັ່ນຊັດເຖິງທາດແທ້ຂອງລັດທີ່ມາຈາກປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ;

2. ເຊີດຊູບົດບາດຂອງອົງການຕຸລາການໃຫ້ເຂັ້ມແຂງ, ໜັກແໜ້ນ ໃຫ້ກາຍເປັນເຄື່ອງມື ທີ່ສັກສິດ ແລະ ເຂັ້ມງວດຂອງພັກ, ເປັນທີ່ເພິ່ງສຸດທ້າຍທາງດ້ານກົດໝາຍຂອງປະຊາຊົນ;

3. ເພີ່ມທະວີປັບປຸງ

ອ່ານຕໍ່ໜ້າ 3

## ຄອບຄົວທີ່ຖືກຜົນກະທົບຈາກເຫດອັກຄີໄພ ໄດ້ຮັບເງິນຊ່ວຍເຫຼືອ 45 ລ້ານກີບ



(ສພຊ) ວັນທີ 10 ເມສາ 2023 ໃນໂອກາດທີ່ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍພັນລາຍາ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຄື່ອນໄຫວເຮັດວຽກຢູ່ແຂວງຈຳປາສັກ ໄດ້ນຳເອົາເງິນຊ່ວຍເຫຼືອຂອງກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ ຈຳນວນ 45 ລ້ານກີບ ມອບໃຫ້ແກ່ປະຊາຊົນ 30 ຄອບຄົວ ຂອງບ້ານສະໜິງ ເມືອງປະທຸມພອນ ແຂວງຈຳປາສັກ ທີ່ຖືກຜົນກະທົບຈາກເຫດການອັກຄີໄພ ໃນຄັ້ງວັນທີ 2 ມີນາ 2023 ທີ່ຜ່ານມາ ໂດຍການມອບຜ່ານອຳນາດການປົກຄອງເມືອງປະທຸມພອນ, ການຈັດຕັ້ງຂອງບ້ານສະໜິງ, ຕາງໜ້າໃຫ້ປະຊາຊົນ 30 ຄອບຄົວ, ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງຈຳປາສັກ, ໜ່ວຍຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງປະທຸມພອນ ເຂົ້າຮ່ວມໃນພິທີມອບ-ຮັບການຊ່ວຍເຫຼືອໃນຄັ້ງນີ້.

## ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ

(ສພຊ) ໃນຕົ້ນເດືອນມີນາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກທີ 17 ແຂວງອັດຕະປື ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ ການປູກຕົ້ນໄມ້ທົດແທນຄືນໃນການພັດທະນາໂຄງການຂອງບໍລິສັດວັງຕັດຂຸດຄົ້ນບໍ່ແຮ່ ຢູ່ເມືອງຊານໄຊ ແຂວງອັດຕະປື ເຊິ່ງນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ທັງເປັນປະທານສະພາປະຊາຊົນແຂວງ ໂດຍມີທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ ພ້ອມດ້ວຍບັນດາພະແນກ

ອ່ານຕໍ່ໜ້າ 7



## ສສຊ ເຂດ 14 ລະດົມເຄື່ອງຊ່ວຍເຫຼືອມອບໃຫ້ປະຊາຊົນມູນຄ່າເກືອບ 225 ລ້ານກີບ



ທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ໄດ້ໃຫ້ສຳພາດໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝ

ອ່ານຕໍ່ໜ້າ 2

## ຜົນງານພົ້ນເດັ່ນຂອງ ສສຊ ແລະ ສສຂ ຈຳປາສັກ

ໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ສາຍທອງ ໄຊຍະວົງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ທັງເປັນປະທານສະພາປະຊາຊົນແຂວງຈຳປາສັກ

ອ່ານຕໍ່ໜ້າ 3





ຮອງປະທານຄະນະ ສສຊ...

ອ່ານຕໍ່ໜ້າ 4



ສຳເລັດການຕິດຕາມກວດກາ...

ອ່ານຕໍ່ໜ້າ 6



ສະພາປະຊາຊົນແຂວງ...

ອ່ານຕໍ່ໜ້າ 7

## ສສຊ...

(ຕໍ່ຈາກໜ້າ 1)

ສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໄດ້ສະແດງຄວາມພາກພູມໃຈທີ່ໄດ້ຕາງໜ້າສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ກໍຄືສະພາປະຊາຊົນແຂວງສາລະວັນ ເຊິ່ງທ່ານໃຫ້ຮູ້ວ່າ: ໂດຍປະຕິບັດຕາມພາລະບົດບາດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນໃນໄລຍະຜ່ານມາ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີຜົນສຳເລັດອັນພົ້ນເດັ່ນຄື:

**ດ້ານການສ້າງ ແລະ ປັບປຸງກົດໝາຍ-ນິຕິກຳ:** ໄດ້ຮັບຮອງແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2021-2025) ທັງໝົດ 15 ສະບັບ ໃນນັ້ນ ສ້າງໃໝ່ 12 ສະບັບ, ປັບປຸງ 3 ສະບັບ, ໃນກອງປະຊຸມສະໄໝສາມັນເທື່ອທີ 2, 3 ຂອງສະພາປະຊາຊົນແຂວງ ຊຸດທີ II ຮັບຮອງແລ້ວ 6 ສະບັບ, ໃນນັ້ນ, 2 ສະບັບ ແມ່ນແນໃສ່ປະຕິບັດ 2 ວາລະແຫ່ງຊາດ ຄື: ຄຸ້ມຄອງການລົງທຶນຂອງລັດໃນກິດຈະການເຊົ່າ ແລະ ສຳປະທານ ແລະ ຕ້ານສະກັດກັ້ນ-ແກ້ໄຂບັນຫາຢາເສບຕິດຢູ່ແຂວງສາລະວັນ; ໄດ້ຮັບຮອງນິຕິກຳໃຕ້ກົດໝາຍຮັບໃຊ້ວຽກງານພາຍໃນຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 4 ສະບັບ; ອອກຄຳແນະນຳຂອງຄະນະປະຈຳສະພາປະຊາຊົນແຂວງ ຈຳນວນ 3 ສະບັບ ເພື່ອແນະນຳການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ; ໄດ້ຈັດຕັ້ງການທາບທາມຮ່າງກົດໝາຍທັງໝົດ 3 ຄັ້ງ, ຈຳນວນ 9 ສະບັບ ແລະ ເຂົ້າຮ່ວມທາບທາມຮ່າງກົດໝາຍ ທັງພາຍໃນ ແລະ ຕ່າງແຂວງ ຕາມການເຊີນ 9 ຄັ້ງ ຈຳນວນ 21 ສະບັບ.

**ການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ:** ສະພາປະຊາຊົນແຂວງໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງຜ່ານກອງປະຊຸມສະໄໝສາມັນ 2 ແລະ 3 ມີຈຳນວນ 10 ສະບັບ ໃນນັ້ນ, ໄດ້ພິຈາລະນາຮັບຮອງເອົາໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາປະຊາຊົນແຂວງ ແລະ ຂອງອົງການອຳນາດລັດຂັ້ນແຂວງ; ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ, ວຽກກວດກາ ແລະ ກວດສອບພາກໃຕ້, ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ຊຸດທີ II ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ໃນແຕ່ລະໄລຍະຕາມກົດໝາຍກຳນົດ; ໄດ້ຕົກລົງບັນຫາສຳຄັນຕ່າງໆ ຜ່ານກອງປະຊຸມຂອງຄະນະປະຈຳສະພາປະຊາຊົນແຂວງສາລະວັນ ສາມາດຮັບຮອງອອກເປັນມະຕິ ໄດ້ທັງໝົດຈຳນວນ 9 ສະບັບ ໃນນັ້ນ, ມະຕິກ່ຽວກັບວຽກງານອົງການປົກຄອງແຂວງ 8 ສະບັບ, ມະຕິສານປະຊາຊົນແຂວງ 1 ສະບັບ.

**ດ້ານການຕິດຕາມກວດກາ:** ສະພາປະຊາຊົນແຂວງໄດ້ເອົາໃຈໃສ່ປະຕິບັດພາລະບົດບາດໃນການຕິດຕາມກວດກາດ້ວຍຄວາມເອົາໃຈໃສ່ເປັນຢ່າງສູງ ໄດ້ຈັດຕັ້ງປະຕິບັດຢ່າງມີຈຸດສຸມໂດຍຜ່ານຮູບການຕ່າງໆ ສາມາດເຄື່ອນໄຫວໄດ້ທັງໝົດຈຳນວນ 14 ຄັ້ງ ໃນນັ້ນເຄື່ອນໄຫວນຳກຳມາທິການສະພາແຫ່ງຊາດ ຈຳນວນ 1 ຄັ້ງ ແລະ ສະພາປະຊາຊົນແຂວງ ໄດ້ສ້າງແຜນການເຄື່ອນໄຫວຕິດຕາມກວດກາ ແລະ ເຂົ້າຮ່ວມຕິດຕາມກວດກາກັບພາກສ່ວນກ່ຽວຂ້ອງ ຈຳນວນ 13 ຄັ້ງເຊັ່ນ: ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ; ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ, ຢູ່ບັນດາພະແນກການ, ເມືອງ ແລະ ອື່ນໆ;

ພິເສດ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ໄດ້ປະເມີນບຸກຄາລະກອນ ທີ່ສະພາເລືອກຕັ້ງ ແລະ ຮັບຮອງການແຕ່ງຕັ້ງ ຈຳນວນ 43 ທ່ານ ເຊິ່ງມີບົດລາຍງານສະເພາະໃຫ້ຂັ້ນເທິງຮັບຊາບ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທັງໝົດ 9 ເລື່ອງ ໄດ້ແກ້ໄຂແລ້ວ 4 ເລື່ອງ ຍັງຄ້າງ 5 ເລື່ອງ ແລະ ຮັບຄຳສະເໜີຂອງປະຊາຊົນ ທັງໝົດ 19 ເລື່ອງ, ສາມາດຄົ້ນຄວ້າພິຈາລະນາ ແລະ ຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງສຳເລັດ 11 ເລື່ອງ, ຍັງຄ້າງ 8 ເລື່ອງ; ໄດ້ຮັບໂທລະສັບສາຍດ່ວນຈາກກອງປະຊຸມໄໝສາມັນ ຂອງສະພາແຫ່ງຊາດ ແລະ ຂອງແຂວງ ມີທັງໝົດ 6 ສາຍ ມີ 6 ຄຳສະເໜີສາມາດຄົ້ນຄວ້າພິຈາລະນາ ແລະ ຈັດສົ່ງໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂໄດ້ສຳເລັດ.

ຜ່ານການພົບປະປະຊາຊົນຜູ້ມີສິດເລືອກຕັ້ງໃນການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕິດພັນກັບມະຕິ XI ຂອງສູນກາງພັກ, ມະຕິ IX ຂອງແຂວງ ແລະ ເຜີຍແຜ່ເນື້ອໃນສອງວາລະແຫ່ງຊາດ ໃຫ້ພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ ແລະ ເຂົ້າໃຈເຄື່ອນໄຫວໄດ້ທັງໝົດ 8 ເມືອງ, ໄດ້ທັງໝົດ 68 ຈຸດ ທຽບໃສ່ແຜນປີປະຕິບັດໄດ້ 76%, ມີຜູ້ເຂົ້າຮ່ວມທັງໝົດ 10.931 ເທື່ອຄົນ ຍິງ 4.667 ເທື່ອຄົນ ທຽບໃສ່ແຜນປີປະຕິບັດໄດ້ 73%; ພ້ອມກັນນັ້ນ, ການພົບປະໂອ້ລົມ ຊຸກຍູ້ປຸກລະດົມປະຊາຊົນ, ຟັງຄຳຄິດເຫັນ, ຄວາມມຸ້ງມາດປາຖະໜາ, ຂໍ້ຂັດຂ້ອງ, ຂໍ້ສະເໜີຕ່າງໆ...ບັນຫາໃດທີ່ສາມາດແກ້ໄຂໄດ້ຜູ້ແທນກໍ່ຊີ້ແຈ້ງກັບທີ່, ບັນຫາທີ່ບໍ່ສາມາດແກ້ໄຂໄດ້ກັບທີ່ແມ່ນໄດ້ສັງລວມເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແກ້ໄຂຢ່າງເໝາະສົມ. ພ້ອມນັ້ນ, ຍັງໄດ້ນຳເຄື່ອງຊ່ວຍເຫຼືອທີ່ລະດົມມາຈາກພາກສ່ວນຕ່າງໆ ໄປມອບໃນໄລຍະທີ່ລົງເຄື່ອນໄຫວ ລວມມູນຄ່າທັງໝົດ 224,7 ລ້ານກວ່າກີບ.

ທ່ານໃຫ້ຮູ້ຕື່ມວ່າ:ບັນຫາທີ່ປະຊາຊົນສະເໜີຫຼາຍໃນການເຄື່ອນໄຫວກໍຍັງແມ່ນບັນຫາກ່ຽວກັບການກໍ່ສ້າງພື້ນຖານໂຄງລ່າງເປັນຕົ້ນແມ່ນສະເໜີຂໍທຶນສ້ອມແປງເສັ້ນທາງ, ສ້ອມແປງຊົນລະປະທານ, ຂົວຂ້າມນ້ຳເຊ, ຫ້ວຍທີ່ເຊື່ອມຕໍ່ບ້ານຕໍ່ບ້ານ; ສະເໜີຂໍຕົວເລກລັດຖະກອນຄູ ແລະ ຂໍຄູສອນເພີ່ມຕື່ມໃນເຂດຫ່າງໄກສອກຫຼີກ; ຂໍທຶນກໍ່ສ້າງໂຮງຮຽນປະຖົມ ແລະ ອະນຸບານ; ຮຽນຈົບວິຊາຊີບແລ້ວແຕ່ບໍ່ໄດ້ເຮັດວຽກ; ຮຽນຈົບມໍ 7 ບໍ່ມີທຶນໄປຮຽນຕໍ່; ຕໍ່ກັບຄຳສະເໜີ ສສຊ, ສສຂ ໄດ້ປຶກສາຫາລືກັບຄະນະນຳຂອງເມືອງ ສ່ວນບັນຫາໃດທີ່ຢູ່ໃນຂັ້ນເມືອງຮັບຜິດຊອບ ແມ່ນມອບໃຫ້ເມືອງແກ້ໄຂສ່ວນຄຳສະເໜີໃດທີ່ກ່ຽວພັນກັບແຂວງ ແມ່ນມອບໃຫ້ພະແນກການທີ່ກ່ຽວຂ້ອງຊີ້ແຈງ ຫຼືລາຍງານໃຫ້ປະຊາຊົນຮັບຊາບ ໂດຍຜ່ານສະພາປະຊາຊົນແຂວງ; ສ່ວນຄຳສະເໜີທີ່ກ່ຽວກັບລະດັບຊາດ ສະພາປະຊາຊົນແຂວງຈະໄດ້ລາຍງານເປັນລາຍງານລັກອັກສອນໃຫ້ແກ່ຄະນະປະຈຳສະພາແຫ່ງຊາດໃນຂັ້ນຕໍ່ໄປ.



## ເລື່ອງເດັ່ນ ຂ່າວເດັດ

# ຄັດໂດຍ: ທອມສະນິດ

*❐ ກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານສະພາບອັດຕາເງິນເຟີ້ປະຈຳເດືອນມີນາ 2023 ໃຫ້ຮູ້ວ່າ: ອັດຕາເງິນເຟີ້ຂອງ ສປປລາວ ໃນເດືອນມີນາ 2023 ຢູ່ໃນລະດັບ 41%, ໝວດທີ່ມີອັດຕາເງິນເຟີ້ສູງກວ່າໝູ່ແມ່ນ ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ ເພີ່ມຂຶ້ນ 51%, ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 41,8%, ຄົມມະນາຄົມ ແລະ ຂົນສົ່ງ ເພີ່ມຂຶ້ນ 41,7%, ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 36,9%, ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 35,0%, ໝວດທີ່ພັກອາໃສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ ເພີ່ມຂຶ້ນ 27,2%,ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 26,7%.*

***ໜສພ. ປະຊາຊົນ 19/04/2023***

*❐ ໃນໄລຍະການສະເຫຼີມສະຫຼອງສົ່ງທ້າຍປີເກົ່າ ພສ 2565 ຕ້ອນຮັບປີໃໝ່ ພສ 2566 ນັບແຕ່ວັນທີ 11-17 ເມສາ (7 ວັນອັນຕະລາຍ ) ທົ່ວປະເທດມີອຸບັດເຫດເກີດຂຶ້ນ 342 ລາຍ, ເພີ່ມຂຶ້ນຈາກປີຜ່ານມາ 30 ລາຍ, ເສຍຊີວິດ 35 ຄົນ, ຍິງ 6 ຄົນ, ບາດເຈັບ 611 ຄົນ, ເພີ່ມຂຶ້ນ 59 ຄົນ; ພາຫະນະເປ່ເພ 589 ຄັນ, ເພີ່ມຂຶ້ນ 44ຄັນ. ສະເພາະວັນທີ 14-16 ທົ່ວປະເທດມີອຸບັດເຫດເກີດຂຶ້ນ 194 ລາຍ, ເສຍຊີວິດ 18 ຄົນ, ບາດເຈັບ 348 ຄົນ, ພາຫະນະເປ່ເພ 337 ຄັນ; ສຳລັບແຂວງທີ່ມີສະຖິຕິເກີດອຸບັດເຫດຫຼາຍກວ່າໝູ່ແມ່ນແຂວງຈຳປາສັກ ມີ 53 ຄັ້ງ, ຮອງລົງມາແມ່ນນະຄອນວຽງຈັນ 33 ຄັ້ງ ແລະ ແຂວງວຽງຈັນ 33 ຄັ້ງ ແລະ ແຂວງທີ່ມີຄົນເສຍຊີວິດຈາກອຸບັດເຫດຫລາຍກວ່າໝູ່ແມ່ນນະຄອນຫລວງວຽງຈັນ 7 ຄົນ, ສະຫວັນນະເຂດ 5 ຄົນ ແລະ ບໍລິຄຳໄຊ 4 ຄົນ. ສ່ວນສາເຫດສ່ວນທີ່ພາໃຫ້ອຸບັດເຫດເພີ່ມຂຶ້ນຈາກປີຜ່ານມາຍ້ອນຜູ້ໃຊ້ລົດ, ໃຊ້ຖະໜົນຈຳນວນໜຶ່ງຍັງບໍ່ປະຕິບັດກົດລະບຽບຈາລະຈອນ ເປັນຕົ້ນດື່ມສິ່ງມຶນເມົາ, ບໍ່ປ່ອຍສິດ, ແຊງບໍ່ຮັບປະກັນ ແລະ ອື່ນໆ.*

***ໜສພ. ປະເທດລາວ 20/04/2023***

*❐ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ອອກໜັງສືແຈ້ງການຫ້າມບໍລິໂພກ ແລະ ຈຳໜ່າຍຜະລິດຕະພັນອາຫານເຝີເຮືອເຄິ່ງສຳເລັດຮູບ ກາເລີຣິດ ເນື່ອງຈາກກວດພົບການປົນເປື້ອນເຊື້ອຈຸລິນຊີ Bacillus cereus 6.600 CFU/ກຣາມ ເກີນມາດຕະຖານກຳນົດ ເຊິ່ງສາມາດເຮັດໃຫ້ເກີດພະຍາດຖອກທ້ອງ, ອາຫານເປັນພິດ ແລະ ມີຄວາມອັນຕະລາຍຕໍ່ສຸຂະພາບ.*

***ໜສພ. ປະເທດລາວ 20/04/2023***

## ປະທານ...

(ຕໍ່ຈາກໜ້າ 1)

ການຈັດຕັ້ງຂອງສານປະຊາຊົນໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ໂດຍສະເພາະສານຂັ້ນຕົ້ນຕ້ອງມີຄວາມລະອຽດ, ຮອບຄອບໃນການດຳເນີນຄະດີ,ເກັບກຳຂໍ້ມູນຫຼັກຖານ ໃຫ້ມີຄວາມຄົບຖ້ວນ, ຮອບດ້ານ, ຈະແຈ້ງ ແລະ ພາວະວິໄສ ເພື່ອຮັບປະກັນໃຫ້ການຕັດສິນຄະດີ ມີຄວາມຖືກຕ້ອງ ແລະ ເປັນທຳ;

4. ເອົາໃຈໃສ່ບຳລຸງ-ສ້າງຜູ້ພິພາກສາ, ພະນັກງານຂອງສານ ຖ້າຜູ້ພິພາກສາດີ-ເກັ່ງ ກໍຈະເຮັດໃຫ້ການຕັດສິນຄະດີມີຄວາມຖືກຕ້ອງ, ເປັນທຳ. ສະນັ້ນ, ຂອດພະນັກງານ, ຜູ້ພິພາກສາ ຍາມໃດກໍຕ້ອງເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ເປັນກົກ, ໃຫ້ມີຄວາມໜັກແໜ້ນ, ມີມານະຈິດຝຶກຝົນປະຕິວັດ ໂດຍໃຫ້ຖືເອົາການລົງຮາກຖານໃກ້ຊິດກັບປະຊາຊົນ ຖືເອົາປະຊາຊົນເປັນກົກ;

5. ປັບປຸງກົນໄກ, ແບບແຜນການຄົ້ນຄວ້າ, ຕັດສິນ ແລະ ພິພາກສາຄະດີ ໃຫ້ມີຄວາມຮັດກຸມ, ໂປ່ງໃສ ແລະ ກວດກາໄດ້, ສ້າງເງື່ອນໄຂໃຫ້ທະນາຍຄວາມ, ໂຈດ ແລະ ຈຳເລີຍ ເຂົ້າຮ່ວມໃນການດຳເນີນຄະດີ, ເພີ່ມທະວີໃຫ້ໂຈດ-ຈຳເລີຍ ໂຕ້ແຍ່ງ-ໂຕ້ຖຽງກ່ຽວກັບຂໍ້ມູນຫຼັກຖານທີ່ແຕ່ລະຝ່າຍຍື່ນຕໍ່ສານໃຫ້ລະອຽດ, ຄົບຖ້ວນ ແລະ ສິ້ນສຸດຂະບວນການໂຕ້ແຍ່ງຕາມກົດໝາຍ, ນຳເອົາຜົນຂອງການໂຕ້ແຍ່ງ-ໂຕ້ຖຽງດັ່ງກ່າວເປັນບ່ອນອີງ, ເຫດຜົນໃນການຕັດສິນແຕ່ລະບັນຫາ;

6. ຍົກສູງຄວາມຮັບຜິດຊອບຂອງຜູ້ພິພາກສາໃນການດຳເນີນ, ຕັດສິນ ແລະ ພິພາກສາຄະດີ ເນື່ອງຈາກວ່າຜູ້ພິພາກສາ ເປັນຜູ້ບັງຄັບບັນຊາ, ຄວບຄຸມການດຳເນີນ, ຊີ້ຂາດກ່ຽວກັບຄະດີ. ຍ້ອນແນວນັ້ນໃນການຕັດສິນ, ພິພາກສາຄະດີ ຕ້ອງຍົກສູງການນຳພາຂອງພັກ, ນຳພາການຕັດສິນ, ພິພາກສາຄະດີ ເພື່ອປົກປ້ອງສິດຜົນປະໂຫຍດຂອງລັດ, ຂອງປະຊາຊົນ. ການຄັດເລືອກຜູ້ພິພາກສາ ຕ້ອງຮັບປະກັນເງື່ອນໄຂ ມາດຕະຖານດ້ານຄຸນທາດການເມືອງ ແລະ ຄວາມຮູ້ຄວາມສາມາດຢູ່ໃນລະດັບອັນແນ່ນອນ; ສ້າງກົນໄກກຳນົດຄວາມຮັບຜິດຊອບຂອງຜູ້ພິພາກສາຢ່າງຈະແຈ້ງ;

7. ເພີ່ມທະວີການຕິດຕາມ ກວດກາ ການປະຕິບັດໜ້າທີ່ຕັດສິນຄະດີຂອງຜູ້ພິພາກສາ ແລະ ພະນັກງານກົດໝາຍໃຫ້ເປັນປົກກະຕິ ດ້ວຍການປັບປຸງກົນໄກ ແບບແຜນວິທີເຮັດວຽກ ພາຍໃນການຈັດຕັ້ງຂອງສານແຕ່ລະຂັ້ນ ໂດຍການເປີດກວ້າງດ້ວຍການຕຳນິສິ່ງຂ່າວຊ່ວຍເຫຼືອເຊິ່ງກັນແລະກັນ ເພື່ອຊອກໃຫ້ເຫັນຜູ້ທີ່ດີກໍຍ້ອງຍໍຊົມເຊີຍ ແລະ ສຶກສາອົບຮົມ, ກ່າວເຕືອນ ຫຼື ປະຕິບັດວິໄນຕໍ່ພະນັກງານທີ່ກະທຳຜິດລະບຽບກົດໝາຍເປັນແຕ່ລະກໍລະນີ. ພ້ອມກັນນັ້ນ ການຈັດຕັ້ງຂອງສານແຕ່ລະຂັ້ນ ຕ້ອງຮັບຟັງຄຳຕຳນິຕິຊົມຈາກສັງຄົມ ຕໍ່ກັບການປະຕິບັດໜ້າທີ່ຂອງພະນັກງານສານຂອງຕົນ ເພື່ອເປົ້າໝາຍສ້າງໃຫ້ສານກາຍເປັນສານຂອງປະຊາຊົນ ແລະ ປົກປ້ອງຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ;

8. ເອົາໃຈໃສ່ປະສານສົມທົບກັບອົງການປົກປ້ອງກົດໝາຍ ແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທີ່ຍັງຄ້າງຢູ່ສະພາ, ປະຕິບັດຄຳຕັດສິນ ຫຼື ພາກສ່ວນອື່ນ ເພື່ອໃຫ້ຄຳຕັດສິນໄດ້ຮັບການຈັດຕັ້ງປະຕິບັດ ເພາະລັດຖະທຳມະນູນ, ລັດເຮົາບໍ່ອະນຸຍາດໃຫ້ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດບໍ່ໄດ້ຮັບການປະຕິບັດ.

## ຜົນງານ...

(ຕໍ່ຈາກໜ້າ 1)

ໄດ້ໃຫ້ສຳພາດຕໍ່ສື່ມວນຊົນທຸກໂດຍໄດ້ຍົກໃຫ້ເຫັນສະພາບລວມ ເຊິ່ງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ມີຈຳນວນ 15 ທ່ານ ຍິງ 3 ທ່ານ ໃນນັ້ນ, ປະຈຳຢູ່ສູນກາງ 7 ທ່ານ ຍິງ 2 ທ່ານ; ປະຈຳຢູ່ທ້ອງຖິ່ນທີ່ຄວບຕຳແໜ່ງເປັນສະມາຊິກສະພາປະຊາຊົນແຂວງ 8 ທ່ານ ຍິງ 1 ທ່ານ ສະນັ້ນ, ຈຳນວນສະມາຊິກສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ມີຈຳນວນທັງໝົດ43ທ່ານຍິງ 10 ທ່ານ.

ທ່ານ ສາຍທອງ ໄຊຍະວົງ ກ່າວວ່າ: ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເປັນຕົ້ນມາ ເຊິ່ງຢູ່ໃນສະພາບການພາກພື້ນ ແລະ ສາກົນ ທີ່ມີການຜັນແປໄປຢ່າງສະຫຼັບສັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫຼໍ່ແຫຼມຫຼາຍດ້ານ ທີ່ຄາດຄະເນໄດ້ຍາກ ເຊິ່ງໄດ້ສົ່ງຜົນກະທົບຕໍ່ປະເທດຕ່າງໆໃນໂລກ ລວມທັງ ສປປລາວ, ເຖິງຢ່າງໃດກໍຕາມ ໃນໄລຍະຜ່ານມາ, ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະບໍລິຫານງານສູນກາງພັກ ແລະ ສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ກໍຄືສະມາຊິກສະພາປະຊາຊົນແຂວງຈຳປາສັກ ໄດ້ເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍກຳນົດໄວ້ຢ່າງຕັ້ງໜ້າ ເຊິ່ງຜົນງານອັນພົ້ນເດັ່ນໃນການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແລະ ສະມາຊິກສະພາປະຊາຊົນແຂວງຈຳປາສັກ ໃນໄລຍະກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ມີ:

**ດ້ານນິຕິບັນຍັດ:** ໄດ້ເຂົ້າຮ່ວມກອງປະຊຸມທາບທາມປະກອບຄຳເຫັນໃສ່ຮ່າງກົດໝາຍຕາມຄຳເຊີນຂອງສະພາແຫ່ງຊາດ, ບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງ ໄດ້ທັງໝົດ 3 ຄັ້ງ ກວມເອົາ 14 ກົດໝາຍ; ໄດ້ໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍອື່ນໆ ໂດຍຕິດພັນກັບການລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝວິສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຊຸດທີ II ຢູ່ບັນດາກົມກອງ, ສະຖາບັນການສຶກສາ, ບັນດາບ້ານຂອງເມືອງ, ນະຄອນ ໃນທົ່ວແຂວງ ໄດ້ທັງໝົດ 109 ຈຸດ, ໃນນັ້ນລວມມີເປົ້າໝາຍທີ່ໄດ້ເຂົ້າຮ່ວມ 96 ບ້ານ, 12 ກົມກອງ, 1 ສະຖາບັນການສຶກສາ ມີຈຳນວນຜົນເຂົ້າຮ່ວມທັງໝົດ 9.355 ຄົນ ຍິງ 4.094 ຄົນ. ໄດ້ຮັບຄຳສະເໜີທັງໝົດ 294 ບັນຫາ. ໃນນັ້ນ, ສະມາຊິກສະພາແຫ່ງຊາດໄດ້ສົມທົບກັບສະມາຊິກສະພາປະຊາຊົນແຂວງ, ອຳນາດການປົກຄອງເມືອງ ອະທິບາຍຕອບແກ້ ໃຫ້ພໍ່ແມ່ປະຊາຊົນຮັບຮູ້ເຂົ້າໃຈ ແລະ ມີຄວາມເປັນເອກະພາບແລ້ວ 97 ບັນຫາ, ມອບໃຫ້ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ນະຄອນ ຊຸກຍູ້ຂະແໜງການກ່ຽວຂ້ອງ ພິຈາລະນາ, ແກ້ໄຂ 123 ບັນຫາ, ສ່ວນອີກ 74 ບັນຫາ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງຮັບເອົາ ເພື່ອນຳໄປປະສານສົມທົບກັບຂະແໜງການກ່ຽວຂ້ອງຂັ້ນແຂວງ ພິຈາລະນາແກ້ໄຂ; ຕິດພັນກັບການເຄື່ອນໄຫວພົບປະປະຊາຊົນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ສົມທົບກັບສະພາແຫ່ງຊາດ, ສະພາປະຊາຊົນແຂວງ ລະດົມທຶນຮອນ ແລະ ວັດຖຸສິ່ງຂອງ ເພື່ອຊ່ວຍເຫຼືອປະຊາຊົນ ລວມມູນຄ່າທັງໝົດ 80 ລ້ານກີບ; ພ້ອມກັນນີ້, ຍັງໄດ້ໂຄສະນາເຜີຍແຜ່ຜ່ານສື່ມວນຊົນຂອງທ້ອງຖິ່ນ ແລະ ຜ່ານລາຍການວິທະຍຸຜູ້ແທນປະຊາຊົນ ເພື່ອເຮັດໃຫ້ປະຊາຊົນບັນດາເຜົ່າຜູ້ມີສິດເລືອກຕັ້ງມີຄວາມຮັບຮູ້, ເຂົ້າໃຈ ແລະ ມີສະຕິເຄົາລົບລັດຖະທຳມະນູນ ແລະ ກົດໝາຍ, ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ມີຄວາມເຂັ້ມງວດເທື່ອລະກ້າວ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ:** ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງໄດ້ປະສານສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ໃນການເກັບກຳຂໍ້ມູນ, ສະຫຼຸບ-ສັງລວມບັນຫາທີ່ພົ້ນເດັ່ນ ແລະ ໄດ້ເປີດກອງປະຊຸມເພື່ອກະກຽມຄວາມພ້ອມໃນການເຂົ້າຮ່ວມກອງປະຊຸມຂອງສະພາແຫ່ງຊາດ ພ້ອມທັງມອບຄວາມຮັບຜິດຊອບໃຫ້ແກ່ສະມາຊິກສະພາແຫ່ງຊາດ ກະກຽມບົດປະກອບຄຳເຫັນຕາມຫົວຂໍ້ທີ່ໄດ້ຮັບມອບໝາຍ ແລະ ໄດ້ປະກອບຄຳຄິດ-ຄຳເຫັນ ຕໍ່ເນື້ອໃນທີ່ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ພິຈາລະນາ, ຮັບຮອງເປັນມະຕິກອງປະຊຸມ ໄດ້ທັງໝົດ 20 ສະບັບ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ:** ໄດ້ເຂົ້າຮ່ວມແຕ່ຫົວທີກັບຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າທາງດ້ານເນື້ອໃນທີ່ ນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ II ເຊິ່ງສາມາດຮັບຮອງເປັນມະຕິກອງປະຊຸມຂອງສະພາປະຊາຊົນແຂວງ ໄດ້ທັງໝົດ 8 ສະບັບ.

**ດ້ານການຕິດຕາມກວດກາຮ່ວມກັບສະພາແຫ່ງຊາດ:** ໄດ້ເຂົ້າຮ່ວມຕິດຕາມກວດກາກັບຄະປະຈຳ, ບັນດາກຳມາທິການ, ຄະນະເລຂາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ໃນການເຄື່ອນໄຫວວຽກງານຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນຫາທີ່ພົ້ນເດັ່ນສັງຄົມໃຫ້ຄວາມສົນໃຈ ໄດ້ທັງໝົດ 2 ຄັ້ງ:

**ດ້ານການຕິດຕາມກວດກາຮ່ວມກັບສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ:** ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ແລະ ບັນດາວຽກງານຈຸດສຸມຈຳນວນໜຶ່ງຂອງອົງການປົກຄອງແຂວງ, ສານປະຊາຊົນ, ອົງການໄອຍະການປະຊາຊົນໄດ້ທັງໝົດ 4 ຄັ້ງຄື: ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຕິດຕາມກວດກາສະພາບພົ້ນເດັ່ນທີ່ເກີດຂຶ້ນຢູ່ໃນສັງຄົມ ເພື່ອເປັນຂໍ້ມູນລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງຈຳສັກ ຊຸດທີ ll; ຮ່ວມກັບຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ລົງຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ວຽກງານການເອົາເນື້ອທີ່ດິນລັດໃຫ້ເຊົ່າ ຫຼື ສຳປະທານ ຢູ່ເມືອງຊະນະສົມບູນແລະເມືອງມຸນລະປາໂມກ, ຮ່ວມກັບຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ລົງຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ຄາດໝາຍສູ້ຊົນຂົງເຂດວັດທະນະທຳ-ສັງຄົມ; ຮ່ວມກັບຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ລົງຕິດຕາມກວດກາ ການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ ຢູ່ເມືອງບາຈຽງຈະເລີນສຸກ, ເມືອງສຸຂຸມາ ເມືອງມຸນລະປາໂມກ ແລະ ເມືອງປາກຊ່ອງ.

ນອກຈາກນັ້ນ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຍັງໄດ້ປະສານສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ຍັງໄດ້ຕິດຕາມກວດກາ ໂດຍອີງໃສ່ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ແລະ ອົງການຈັດຕັ້ງໂດຍໄດ້ຮັບຄຳຮ້ອງຂໍຄວາມເປັນທຳທັງໝົດ ຈຳນວນ 31 ເລື່ອງ: ໃນນັ້ນ; ຄຳຮ້ອງຂໍຄວາມເປັນທຳທີ່ສິ້ນສຸດຂະບວນຍຸຕິທຳ ຈຳນວນ 17 ເລື່ອງ, ຄຳຮ້ອງຂໍຄວາມເປັນທຳທີ່ຍັງບໍ່ທັນສິ້ນສຸດຂະບວນຍຸຕິທຳ ຈຳນວນ 12 ເລື່ອງ, ຄຳຮ້ອງຂໍຄວາມເປັນທຳທີ່ຍັງບໍ່ທັນສິ້ນສຸດຂະບວນການບໍລິຫານ ຈຳນວນ 2 ເລື່ອງ ໃນຈຳນວນຄຳຮ້ອງຂໍດັ່ງກ່າວ ໄດ້ຮັບການແກ້ໄຂສຳເລັດແລ້ວ 29 ເລື່ອງ, ພວມສືບຕໍ່ແກ້ໄຂຈຳນວນ 2 ເລື່ອງ ແລະ ໄດ້ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງເພື່ອຄົ້ນຄວ້າ, ປຶກສາຫາລື ໄດ້ທັງໝົດຈຳນວນ 5 ຄັ້ງ, ຕ້ອນຮັບ ແລະ ໃຫ້ຄຳປຶກສາດ້ານກົດໝາຍ ແກ່ປະຊາຊົນທີ່ເຂົ້າມາຍື່ນຄຳຮ້ອງຂໍຄວາມເປັນທຳ ຢູ່ສະພາປະຊາຊົນແຂວງໄດ້ທັງໝົດ 115 ຄັ້ງ, 150 ເທື່ອຄົນ.

**ການເຄື່ອນໄຫວວຽກງານການຕ່າງປະເທດ:** ໂດຍຍຶດໝັ້ນແນວທາງການຕ່າງປະເທດຂອງພັກ ກໍຄືແຜນການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ; ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ໃນການເຄື່ອນໄຫວວຽກງານດັ່ງກ່າວ ດັ່ງນີ້: ເຂົ້າຮ່ວມຕິດຕາມຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ສສ.ຫວຽດນາມ; ເຂົ້າຮ່ວມພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດລາວ-ຫວຽດນາມ, ຫວຽດນາມ-ລາວ ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບການຮ່ວມມືຮອບດ້ານ ຄົບຮອບ 45 ປີ (18/7/1977-18/7/2022); ຮ່ວມກັບຄະນະຜູ້ແທນຂັ້ນສູງແຂວງຈຳປາສັກ ເຄື່ອນໄຫວເຮັດວຽກ ແລະ ຢ້ຽມຢາມບັນດາແຂວງພາກ ໃຕ້, ພາກກາງ ສສ.ຫວຽດນາມ ໄດ້ທັງໝົດ 7 ແຂວງຄື: ແຂວງບິ່ງເຝືອກ, ແຂວງບິ່ງເຢືອງ, ແຂວງດົ່ງນາຍ, ແຂວງເກິ່ນເທີ, ແຂວງອານຢາງ, ແຂວງດົ່ງທັບ ແລະ ນະຄອນໂຮ່ຈີມິນ; ເຂົ້າຮ່ວມຕ້ອນຮັບຄະນະຜູ້ແທນຈາກບັນດາແຂວງພາກກາງ, ພາກໃຕ້ຂອງ ສສ.ຫວຽດນາມ ທີ່ເດີນທາງມາຢ້ຽມຢາມແຂວງຈຳປາສັກ; ຖືກແຕ່ງຕັ້ງເປັນຮອງປະທານສະມາຄົມມິດຕະພາບລາວ-ກຳປູເຈຍ (ທ່ານ ແກ້ວລັດຕະນະສີຫາວົງ); ສົມທົບກັບກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ໃນການເປີດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງຂອງແຂວງ ເພື່ອປຶກສາຫາລືການກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມຮ່ວມລະຫວ່າງ ສະພາແຫ່ງຊາດ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ(CLV) ຄັ້ງທີ 1.

## ສພຂ ຫຼວງນໍ້າທາ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ



(ສພຊ) ເພື່ອເປັນການຈັດຕັ້ງປະຕິບັດພາລະບົດບາດດ້ານການຕິດຕາມ, ກວດກາຂອງສະພາປະຊາຊົນແຂວງຫຼວງນໍ້າທາ ໃນລະຫວ່າງວັນທີ 27-30 ມີນາ 2023 ນໍາໂດຍທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ແລະ ສອງວາລະແຫ່ງຊາດ ຢູ່ບັນດາເມືອງ ຄື: ເມືອງຫຼວງນໍ້າທາ, ເມືອງສິງ, ເມືອງລອງ, ເມືອງພູຄາ ແລະ ເມືອງນາແລ, ມີບັນດາທ່ານເລຂາພັກເມືອງ, ຮອງເຈົ້າເມືອງ, ຄະນະປະຈໍາພັກເມືອງ, ກໍາມະການພັກເມືອງ, ຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ, ມີບັນດາຫົວໜ້າຫ້ອງການຂັ້ນເມືອງ ແລະ ວິຊາການກ່ຽວຂ້ອງບັນດາເມືອງເຂົ້າຮ່ວມ.

ການເຄື່ອນໄຫວຄັ້ງນີ້ແມ່ນແນໃສ່ຕິດຕາມ, ກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ແລະ ສອງວາລະແຫ່ງຊາດຢູ່ຂັ້ນເມືອງ. ຜ່ານການຮັບຟັງການລາຍງານຂອງບັນດາຫົວໜ້າຫ້ອງການກ່ຽວຂ້ອງ ແລະ ກອງບັນຊາການ ປກສ ກ່ຽວກັບການປະຕິບັດບັນດາວຽກງານດັ່ງກ່າວ ແລະ ການລົງກວດກາພື້ນທີ່ຕົວຈິງ ເຫັນວ່າການປະຕິບັດບັນດາວຽກງານຢູ່ຂັ້ນເມືອງ ແມ່ນມີຂໍ້ສະດວກ ແລະ ຜົນສໍາເລັດຫຼາຍດ້ານ. ແຕ່ເຖິງຢ່າງໃດກໍຕາມ ຍັງມີຫຼາຍບັນຫາທີ່ມີຄວາມຫຍຸ້ງຍາກ ເປັນຕົ້ນແມ່ນການປະຕິບັດລາຍຈ່າຍງົບປະມານແຫ່ງລັດບໍ່ຖືກເປົ້າໝາຍ, ບັນຫາຜົນກະທົບດ້ານສິ່ງແວດລ້ອມຂອງໂຮງງານພາກເອກະຊົນ ແລະ ການປະຕິບັດວາລະແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ທີ່ຍັງເປັນສິ່ງທ້າທາຍ ແລະ ຈະຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂ.

## ຮອງປະທານຄະນະ ສສຊ ຫຼວງພະບາງ ພົບປະຜູ້ມີສິດເລືອກຕັ້ງ ແລະ ເຊັນບົດບັນທຶກຮ່ວມ



(ສພຊ) ວັນທີ 31 ມີນາຜ່ານມານີ້, ທ່ານ ສົມພອນ ສີອຸດົມພັນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ, ຮອງປະທານສະພາປະຊາຊົນແຂວງ, ປະທານຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕາມຄໍາແນະນໍາຂອງຄະນະປະຈໍາສະພາແຫ່ງຊາດ ແລະ ຄະນະປະຈໍາສະພາປະຊາຊົນແຂວງ ຢູ່ຫ້ອງປະຊຸມຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງຫຼວງພະບາງ ໂດຍການຮ່ວມຂອງທ່ານ ປິ່ງວ່າງ ຫວ່າງເຈຍຊ່າ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ມີບັນດາຕາງໜ້າໃຫ້ແກ່ສະໜາມບິນສາກົນ, ລັດວິສາຫະກິດນໍ້າປະປາ, ລັດວິສາຫະກິດລາວໂທລະຄົມ ສາຂາແຂວງຫຼວງພະບາງ ແລະ ພະນັກງານຫຼັກແຫຼ່ງຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເຂົ້າຮ່ວມຮັບຟັງ.

ໃນການລົງເຄື່ອນໄຫວວຽກງານຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບການໂດຍຫຍໍ້ການຈັດຕັ້ງປະຕິບັດວຽກງານປີ 2022 ແລະ ທິດທາງແຜນການ ປີ 2023 ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ; ຈາກນັ້ນ, ທ່ານ ສົມພອນ ສີອຸດົມພັນ ໄດ້ນໍາເອົາເນື້ອໃນຈິດໃຈຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ມາເຜີຍແຜ່ໃຫ້ບັນດາຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າໃຈທົ່ວເຖິງກັນ.

ໃນໂອກາດດຽວກັນນັ້ນ, ຍັງໄດ້ມີພິທີເຊັນບົດບັນທຶກການປະສານງານລະຫວ່າງຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ກັບພະແນກໂຍທາທິການ ແລະ ຂົນສົ່ງແຂວງ; ຈາກນັ້ນ, ທ່ານ ອຸ່ນ ດວງມະນີ ຮອງປະທານຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ຂຶ້ນລາຍງານຄວາມຈໍາເປັນໃນການສ້າງບົດບັນທຶກດັ່ງກ່າວ ເພື່ອເປັນບ່ອນອີງພື້ນຖານແລະເປັນໃຈກາງການປະສານງານໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ, ວ່ອງໄວ ແລະ ຮັດກຸມຂຶ້ນກວ່າເກົ່າ ຕາງໜ້າລົງລາຍເຊັນໃນບົດບັນທຶກໂດຍທ່ານ ສົມພອນ ສີອຸດົມພັນ ໃນນາມເປັນປະທານຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ທ່ານ ປິ່ງວ່າງ ຫວ່າງເຈຍຊ່າ ໃນນາມຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ມີບັນດາທ່ານທີ່ເຂົ້າຮ່ວມພິທີເປັນສັກສີພິຍານ.

(ຂ່າວ: ສຸດາກອນ ໂພສະຫວັດ; ພາບ: ວິລີຍະ ວັນນະສີ)

## ສສຊ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ຢູ່ເມືອງຍອດອູ

(ສພຊ) ໃນລະຫວ່າງວັນທີ 30-31 ມີນາຜ່ານມາ, ທ່ານ ສົມຈິດ ທັບລະກອນ ຮອງປະທານຄະນະປະຈໍາສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ຢູ່ເມືອງຍອດອູ ແຂວງຜົ້ງສາລີ.



ໃນການເຄື່ອນໄຫວຕິດຕາມກວດກາໃນຄັ້ງນີ້ ໄດ້ປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງຂອງເມືອງຍອດອູ ໂດຍມີສະມາຊິກສະພາປະຊາຊົນຂັ້ນແຂວງປະຈໍາເມືອງ; ບັນດາສະຫາຍຄະນະບໍລິຫານງານພັກເມືອງ, ບັນດາທ່ານສະມາຊິກອົງການປົກຄອງເມືອງ, ໄອຍະການ, ປກຊ-ປກສ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ; ໃນທີ່ປະຊຸມໄດ້ຮັບຟັງການລາຍງານຈາກອົງການປົກຄອງເມືອງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ; ໂຄງການລົງທຶນຂອງລັດທີ່ມອບໃຫ້ເມືອງຄຸ້ມຄອງ ປະຈໍາປີ 2022 ແລະ ການກໍານົດແຜນການປະຈໍາປີ 2023; ການແບ່ງຂັ້ນຄຸ້ມຄອງໂຄງການປະເພດ V; ຂັ້ນຕອນອະນຸຍາດໃຫ້ນັກລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດໃນການເຊົ່າ-ສໍາປະທານດິນລັດ; ການຈັດຕັ້ງປະຕິບັດການເກັບລາຍຮັບ-ຄຸ້ມຄອງລາຍຈ່າຍ; ການຈັດຕັ້ງປະຕິບັດບັນດາຄາດໝາຍ ເປັນຕົ້ນແມ່ນ ຂົງເຂດສຶກສາທິການ ແລະ ກິລາ, ຂົງເຂດສາທາລະນະສຸກ; ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ, ຂົງເຂດຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ຂົງເຂດບັນດາເຜົ່າ, ສາສະໜາ; ການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕໍາຫຼວດ; ການດໍາເນີນຄະດີຢູ່ສານ; ການພິຈາລະນາຄໍາຕັດສິນຂອງສານປະຊາຊົນ; ການຄຸ້ມຄອງ, ການນໍາພາ-ຊີ້ນໍາ ແລະ ການບັນຊາກໍາລັງກອງຫຼອນ-ກໍາລັງປ້ອງກັນຕົວ; ຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະທີ 2; ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ; ຮັບຟັງການລາຍຈາກຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເມືອງ ກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈໍາເມືອງ ໃນໄລຍະ 1 ປີຜ່ານມາ ໃນການປະຕິບັດພາລະບົດບາດຂອງສະມາຊິກສະພາປະຊາຊົນແຂວງ ກໍຄືການເປັນຕົວແທນຂອງປະຊາຊົນບັນດາເຜົ່າ; ຈາກນັ້ນ, ຍັງໄດ້ຮັບຟັງການລາຍງານເພີ່ມຕື່ມຕາມຄໍາເຈາະຈີ້ມຂອງປະທານກອງປະຊຸມ ແລະ ຄະນະທີມງານ ທີ່ເຫັນວ່າຍັງບໍ່ທັນພາລະວິໄສ ແລະ ສອດຄ່ອງກັບກົດໝາຍແລະລະບຽບການຕ່າງໆ.

ທັງນີ້, ກໍເພື່ອເປັນການຊຸກຍູ້ໃຫ້ອົງການບໍລິຫານທຸກຂັ້ນ ປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ; ປະກອບສ່ວນເຂົ້າໃນການເຄົາລົບລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ, ມະຕິກອງປະຊຸມຂອງສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຢູ່ແຂວງຜົ້ງສາລີ ມີຄວາມເຂັ້ມແຂງ ແລະ ເພື່ອເປັນຂໍ້ມູນໃຫ້ແກ່ການປະກອບຄໍາເຫັນຂອງຄະນະປະຈໍາສະພາປະຊາຊົນແຂວງຜົ້ງສາລີ ໃນການກະກຽມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II.

ຈາກນັ້ນ, ທ່ານ ສົມຈິດ ທັບລະກອນ ພ້ອມດ້ວຍຄະນະ ແລະ ພາກກ່ຽວຂ້ອງ ຍັງໄດ້ລົງຕິດຕາມກວດກາ ແລະ ເກັບຂໍ້ມູນເພີ່ມຕື່ມຢູ່ພາກສະໜາມ ເປັນຕົ້ນແມ່ນ ໂຄງການຂຸດຄົ້ນ ແລະ ປຸງແຕ່ງຖ່ານຫີນ ເຂດແມງກວາພົງ ເມືອງຍອດອູ (ເຂດ 2) ແລະ ໂຄງການສໍາຫຼວດຊອກຄົ້ນຖ່ານຫີນ ເຂດແສວລີສູ່ ເມືອງຍອດອູ ແຂວງຜົ້ງສາລີ.

ໂອກາດດຽວກັນນີ້, ຄະນະຍັງໄດ້ມອບໂທລະໂຄ່ງໃຫ້ອົງການປົກຄອງບ້ານບໍ່ໃຕ້, ບ້ານພູເໜືອສານ, ເມືອງຍອດອູ ຈໍານວນ 2 ຊຸດ ມູນຄ່າລວມທັງໝົດ 5 ລ້ານກວ່າກີບ.

(ສູນທອງ ວິໄລຈິດ)

# ສຳເລັດການຕິດຕາມກວດກາທີ່ເມືອງຂວາ ແລະ ເມືອງບຸນໃຕ້ ແຂວງຜົ້ງສາລີ



(ສພຊ) ລະຫວ່າງວັນທີ 27-29 ມີນາ 2023 ທ່ານ ທອງສີ ເສົາສຸລິພົມ ປະທານຄະນະປະຈຳສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ສຳເລັດການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ທີ່ເມືອງຂວາ ແລະ ເມືອງບຸນໃຕ້ ແຂວງຜົ້ງສາລີ.

ທັງນີ້, ກໍເພື່ອເປັນຂໍ້ມູນໃຫ້ແກ່ການປະກອບຄຳເຫັນຂອງຄະນະປະຈຳສະພາປະຊາຊົນແຂວງ ໃນການກະກຽມກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ຊຸກຍູ້ໃຫ້ອົງການບໍລິຫານທຸກຂັ້ນປະກອບສ່ວນເຂົ້າໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ; ປະກອບສ່ວນເຂົ້າໃນການເຄົາລົບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ. ແນໃສ່ເຮັດໃຫ້ຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຢູ່ແຂວງຜົ້ງສາລີ ມີຄວາມເຂັ້ມແຂງ.

ການຕິດຕາມກວດກາໃນຄັ້ງນີ້ ໄດ້ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງເມືອງຂວາ ແລະ ເມືອງບຸນໃຕ້ ແຂວງຜົ້ງສາລີ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ; ມີສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເມືອງ; ບັນດາສະຫາຍຄະນະບໍລິຫານງານພັກເມືອງ, ບັນດາທ່ານສະມາຊິກອົງການປົກຄອງເມືອງ, ອົງການແນວລາວສ້າງຊາດເມືອງ, ສະຫະພັນນັກຮົບເກົ່າເມືອງ, ບັນດາປະທານອົງການຈັດຕັ້ງມະຫາຊົນຂັ້ນເມືອງ ແລະ ຫົວໜ່ວຍທຸລະກິດ ຜູ້ປະກອບການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍຈາກພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ເຈົ້າໜ້າທີ່ຕຳຫຼວດ; ການດຳເນີນຄະດີຢູ່ສານ; ການພິຈາລະນາຄຳຕັດສິນຂອງສານປະຊາຊົນ ທີ່ຄູ່ຄວາມບໍ່ພໍໃຈ; ການຄຸ້ມຄອງ, ການນຳພາ-ຊີ້ນຳ ແລະ ການບັນຊາກຳລັງກອງຫຼອນ-ກຳລັງປ້ອງກັນຕົວ; ຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ; ໂຄງການລົງທຶນຂອງລັດທີ່ມອບໃຫ້ເມືອງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ປະຈຳປີ 2022 ແລະ ການກຳນົດແຜນການ ປະຈຳປີ 2023; ການກະຈາຍອຳນາດແບ່ງຂັ້ນຄຸ້ມຄອງໂຄງການປະເພດ V; ຂັ້ນຕອນອະນຸຍາດໃຫ້ນັກລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດໃນການເຊົ່າ-ສຳປະທານດິນລັດ; ການອະນຸຍາດການໃຫ້ສຳປະທານເນື້ອທີ່ດິນໃຫ້ໂຄງການທົດລອງລ້ຽງສັດໃຫຍ່ຈຸດບ້ານສຳພັນໄຊ ເມືອງບຸນໃຕ້ (ການແກ້ໄຂບັນຫາຂໍ້ຂັດແຍ່ງກັບປະຊາຊົນ ທີ່ມີເນື້ອທີ່ທັບຊ້ອນ); ຄວາມຄືບໜ້າໃນການສະຫງວນເນື້ອທີ່ດິນ ເປັນເນື້ອທີ່ດິນຂອງລັດ ເພື່ອກໍ່ສ້າງຕະຫຼາດຂອງເມືອງ ເຂດບ້ານຕຸ່ນ ເມືອງຂວາ (ການສຳຫຼວດ-ອອກແບບ, ປັກຫຼັກໝາຍ, ເກັບກຳຂໍ້ມູນຜົນກະທົບ ແລະ ການຊົດເຊີຍຜົນກະທົບ); ການຈັດຕັ້ງປະຕິບັດບັນດາຄາດໝາຍ ທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາປະຊາຊົນແຂວງ ເປັນຕົ້ນແມ່ນຂົງເຂດສຶກສາທິການ ແລະ ກິລາ ແລະ ຂົງເຂດສາທາລະນະສຸກ; ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ ແລະ ຂົງເຂດຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂົງເຂດບັນດາເຜົ່າ. ຈາກນັ້ນ, ຍັງໄດ້ຮັບຟັງການລາຍງານເພີ່ມຕື່ມຕາມຄຳເຈາະຈີ້ມຂອງປະທານກອງປະຊຸມທີ່ເຫັນວ່າຍັງບໍ່ທັນພາລະວິໄສ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການຕ່າງໆ.

ໂອກາດດຽວກັນນີ້, ທ່ານ ທອງສີ ເສົາສຸລິພົມ ພ້ອມດ້ວຍຄະນະ ແລະ ພາກສ່ວນກ່ຽວຂ້ອງທີ່ຕິດຕາມກວດກາ ແລະ ເກັບຂໍ້ມູນເພີ່ມຕື່ມຢູ່ພາກສະໜາມ ເປັນຕົ້ນແມ່ນໂຄງການກໍ່ສ້າງຕະຫຼາດຢູ່ບ້ານນາຕຸ່ນ ເມືອງຂວາ; ຈຸດພັກລົດພູຜາເຜີ້ງ ເມືອງບຸນໃຕ້ ແລະ ໂຄງການລ້ຽງສັດໃຫຍ່ ຈຸດບ້ານສຳພັນໄຊ ເມືອງບຸນໃຕ້ ແຂວງຜົ້ງສາລີ. ພ້ອມນີ້, ທາງຄະນະທີມງານຍັງໄດ້ນຳເອົາໂທລະໂຄ່ງ ມາມອບໃຫ້ອົງການປົກຄອງບ້ານອົມທັບ, ບ້ານກົກງີ້ວ ເມືອງຂວາ ຈຳນວນ 2 ຊຸດ, ອົງການປົກຄອງບ້ານສະໂນນ້ຳລານ, ບ້ານຈາທໍ່ ເມືອງບຸນໃຕ້ ຈຳນວນ 2 ຊຸດ ມູນຄ່າລວມທັງໝົດ 5 ລ້ານກວ່າກີບ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ຕິດຕາມ-ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ສອງວາລະແຫ່ງຊາດ ຢູ່ເມືອງຄົງເຊໂດນ



(ສພຊ) ໃນລະຫວ່າງວັນທີ 21-22 ມີນາຜ່ານມາ, ສະພາປະຊາຊົນແຂວງສາລະວັນ ໄດ້ເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ຕິດຕາມ-ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2023, ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຢູ່ທີ່ເມືອງຄົງເຊໂດນ ແຂວງສາລະວັນ ນຳພາຄະນະໂດຍທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 14 ປະທານສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຂອງທ່ານ ປອ. ສະໄໝ ໂພທິສານ ເຈົ້າເມືອງໆຄົງເຊໂດນ; ມີຕາງໜ້າຈາກພະແນກການອ້ອມຂ້າງແຂວງທີ່ກ່ຽວຂ້ອງ ແລະ ວິຊາການຂອງສະພາປະຊາຊົນແຂວງສາລະວັນ.

ການເຄື່ອນໄຫວຄັ້ງນີ້, ເພື່ອເປັນການຈັດຕັ້ງປະຕິບັດພາລະບົດບາດສິດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ທີ່ກຳນົດໄວ້ໃນກົດໝາຍຂອງສະພາແຫ່ງຊາດ ສະພາປະຊາຊົນຂັ້ນແຂວງ ທັງເປັນການຢ້ຽມຢາມພົບປະຜູ້ມີສິດເລືອກຕັ້ງຂອງຕົນ ແລະ ເກັບກຳຂໍ້ມູນຄຳສະເໜີທາງສຽງຂອງພໍ່ແມ່ປະຊາຊົນ, ຕິດຕາມ-ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2023, ຕິດພັນກັບການຈັດຕັ້ງປະຕິບັດສອງວາລະແຫ່ງຊາດຂອງບັນດາພະແນກການ, ບັນດາເມືອງ ແລະ ກຸ່ມບ້ານ ໃນໄລຍະຜ່ານມາ.

ກອງປະຊຸມຮ່ວມກັບອົງການປົກຄອງເມືອງຄົງເຊໂດນ ໄດ້ໄຂຂຶ້ນທີ່ສະໂມສອນຂອງເມືອງ ເຊິ່ງໄດ້ຮັບຟັງການລາຍງານຈາກເຈົ້າເມືອງເມືອງຄົງເຊໂດນ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນໄລຍະຜ່ານມາ, ຮັບຟັງການລາຍງານຄວາມຄືບໜ້າ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ພ້ອມທັງຮ່ວມກັນສົນທະນາແລກປ່ຽນຄຳຄິດເຫັນ ເພື່ອຊອກຫາວິທີທາງແກ້ໄຂບາງບັນຫາຕໍ່ຂໍ້ຫຍຸ້ງຍາກທີ່ພົບເຫັນຂອງການຈັດຕັ້ງປະຕິບັດໃນໄລຍະຜ່ານມາ; ພ້ອມນັ້ນ, ຄະນະຍັງໄດ້ເຄື່ອນໄຫວພາກສະໜາມເພື່ອຕິດຕາມ-ກວດກາຄວາມຄືບໜ້າບັນດາໂຄງການເຊົ່າ-ສຳປະທານລົງທຶນຂອງລັດ ເປັນຕົ້ນແມ່ນໄດ້ເຄື່ອນໄຫວຕິດຕາມຊຸກຍູ້ ໂຄງການສົ່ງເສີມການປູກເຂົ້າທັນສະໄໝຢູ່ຈຸດບ້ານໂອກາດ; ຕິດຕາມ-ກວດກາໂຄງການເຊົ່າ-ສຳປະທານທີ່ດິນ ກໍ່ສ້າງຂົວຈົມຂອງບໍລິສັດ ຕົ່ງວິໄລ ກໍ່ສ້າງສ້ອມແປງຂົວທາງຈຳກັດ; ຕິດຕາມ-ກວດກາໂຄງການເຊົ່າ-ສຳປະທານຕະຫຼາດຝ້າບັນດານແກ່ນ ແລະ ຕິດຕາມ-ກວດກາຄວາມຄືບໜ້າໂຄງການຊົນລະປະທານບ້ານແກ້ງຫວດ.

ນອກນັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ຍັງໄດ້ເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງຂອງຕົນ ຢູ່ 2 ຈຸດຄື: ບ້ານຫີນສື່ອ ແລະ ບ້ານນາປົ່ງ, ມີຜູ້ເຂົ້າຮ່ວມຟັງທັງໝົດ 200 ກວ່າຄົນ ທັງນີ້, ກໍເພື່ອນຳເອົາເນື້ອໃນຈິດໃຈຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສາລະວັນ ຊຸດທີ II ກໍຄືມະຕິສຳຄັນຕ່າງໆ ໂຄສະນາເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ ທັງເກັບກຳຄວາມຂັດຂ້ອງໝອງໃຈ ຄຳສະເໜີຂອງພໍ່ແມ່ປະຊາຊົນພາຍໃນບ້ານ.

ການເຄື່ອນໄຫວໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຂີດຄວາມສາມາດ ແລະ ປະສິດທິພາບສະພາປະຊາຊົນຂັ້ນແຂວງ ໃນ ສປປລາວ (STEPS) ເຊິ່ງສະພາປະຊາຊົນແຂວງສາລະວັນ ຈະໄດ້ສືບຕໍ່ເດີນທາງໄປເຄື່ອນໄຫວຢູ່ທີ່ເມືອງລະຄອນເພັງ ແຂວງສາລະວັນ ຕື່ມອີກ ໃນລະຫວ່າງວັນທີ 23-24 ມີນາ 2023 ຈຶ່ງຈະສຳເລັດ.

(ດີລຳພົນ ພົມມະຈັນ)



# ສະພາປະຊາຊົນແຂວງຫົວພັນ-ແທັງຮວາ ພົບປະແລກປ່ຽນບົດຮຽນ



(ສພຊ) ເພື່ອເປັນການເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດອ້າຍນ້ອງ ແລະ ການຮ່ວມມືຮອບດ້ານລະຫວ່າງລາວ-ຫວຽດນາມ, ຫວຽດນາມ-ລາວ ທີ່ມີມາແຕ່ດຶກດຳບັນໃຫ້ເຕີບໃຫຍ່ຂະຫຍາຍຕົວ, ເຕັມໄປດ້ວຍຄວາມໝາຍອັນເລິກເຊິ່ງ ແລະ ເກີດດອກອອກຜົນ ກໍຄືແຂວງຫົວພັນ-ແຂວງແທັງຮວາ ເວົ້າລວມ ເວົ້າສະເພາະສະພາປະຊາຊົນແຂວງຫົວພັນ ແລະ ສະພາປະຊາຊົນແຂວງແທັງຮວາ ສສ.ຫວຽດນາມ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ ແລະ ເປັນການສືບຕໍ່ຜັນຂະຫຍາຍບົດບັນທຶກຊ່ວຍຈຳໃນການພົບປະແລກປ່ຽນບົດຮຽນການເຄື່ອນໄຫວລະຫວ່າງສະພາປະຊາຊົນແຂວງຫົວພັນ ແຫ່ງ ສປປລາວ ແລະ ສະພາປະຊາຊົນແຂວງແທັງຮ່ວາ ແຫ່ງ ສສ.ຫວຽດນາມ ທີ່ໄດ້ລົງນາມຄັ້ງວັນທີ 29 ກັນຍາ 2022 ທີ່ນະຄອນຊຳເຊີນ ແຂວງແທັງຮວາ ສສ.ຫວຽດນາມ.

ໃນວັນທີ 11 ເມສາ 2023 ສະພາປະຊາຊົນແຂວງຫົວພັນ ແລະ ສະພາປະຊາຊົນແຂວງແທັງຮວາ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນຮ່ວມກັນຢູ່ທີ່ສະພາປະຊາຊົນແຂວງຫົວພັນ ເຊິ່ງຝ່າຍຫວຽດນາມນຳໂດຍສະຫາຍ ຫງວຽນ ກວາງຮ້າຍ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງແທັງຮວາ ສສ.ຫວຽດນາມ ແລະ ຝ່າຍລາວນຳໂດຍສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນ.

ໃນວາລະກອງປະຊຸມ, ທັງສອງຝ່າຍໄດ້ຜັດປ່ຽນກັນລາຍງານໂດຍຫຍໍ້ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງໃຫ້ກັນແລະກັນໄດ້ຮັບຊາບ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມທັງສອງຝ່າຍກໍໄດ້ພ້ອມກັນສົນທະນາແລກປ່ຽນບົດຮຽນນຳກັນຫຼາຍດ້ານ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນຕົນ ອີກດ້ານໜຶ່ງກໍເພື່ອເປັນການສືບຕໍ່ສ້າງຄວາມສາມັກຄີເປັນພິເສດລະຫວ່າງຫົວພັນ-ແທັງຮວາ ໃຫ້ນັບມື້ນັບເພີ່ມທະວີຂຶ້ນ ກໍຄືສອງສະພາປະຊາຊົນແຂວງຫົວພັນ-ແທັງຮວາ ໄດ້ໄປແລກປ່ຽນບົດຮຽນເຊິ່ງກັນແລະກັນ ຕະຫຼອດໄປ.

(ເວີນ ແກ້ວບຸນມີ)

# ຕິດຕາມກວດກາຢູ່ເມືອງຜົ້ງສາລີ ແລະ ເມືອງບຸນເໜືອ



(ສພຊ) ໃນວັນທີ 5 ແລະ ວັນທີ 10 ເມສາ 2023, ທ່ານ ສົມຈິດ ທັບລະກອນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ສືບຕໍ່ລົງຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ທີ່ເມືອງຜົ້ງສາລີ ແລະ ເມືອງບຸນເໜືອ ແຂວງຜົ້ງສາລີ ເຊິ່ງໄດ້ຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງຂອງສອງເມືອງດັ່ງກ່າວ ໂດຍການເປັນປະທານຂອງທ່ານ ສົມຈິດ ທັບລະກອນ; ມີທ່ານເລຂາພັກ-ເຈົ້າເມືອງ, ສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເມືອງ; ບັນດາສະຫາຍຄະນະບໍລິຫານງານພັກເມືອງ, ບັນດາທ່ານສະມາຊິກອົງການປົກຄອງເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ໄອຍະການ, ປກຊ, ປກສ ຂັ້ນເມືອງເຂົ້າຮ່ວມ.

ທັງນີ້, ກໍເພື່ອຮັບຟັງການລາຍງານຈາກອົງການປົກຄອງເມືອງຜົ້ງສາລີ ແລະ ເມືອງບຸນເໜືອ ກ່ຽວກັບການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ເຈົ້າໜ້າທີ່ຕຳຫຼວດ; ການດຳເນີນຄະດີຢູ່ສານ; ການພິຈາລະນາຄຳຕັດສິນຂອງສານປະຊາຊົນ; ການຄຸ້ມຄອງ, ການນຳພາ-ຊີ້ນຳ ແລະ ການບັນຊາກຳລັງກອງຫຼອນ-ກຳລັງປ້ອງກັນຕົວ; ຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະທີ 2; ການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ; ໂຄງການລົງທຶນຂອງລັດທີ່ມອບໃຫ້ເມືອງຄຸ້ມຄອງ ປະຈຳປີ 2022 ແລະ ການກຳນົດແຜນການ ປະຈຳປີ 2023; ການແບ່ງຂັ້ນຄຸ້ມຄອງໂຄງການປະເພດ V; ຂັ້ນຕອນອະນຸຍາດໃຫ້ນັກລົງທຶນພາກເອກະຊົນພາຍໃນ ແລະ ຕ່າງປະເທດ, ການເກັບພັນທະໃນການເຊົ່າ-ສຳປະທານດິນລັດ; ການຈັດຕັ້ງປະຕິບັດການເກັບລາຍຮັບ-ຄຸ້ມຄອງລາຍຈ່າຍ; ການຈັດຕັ້ງປະຕິບັດບັນດາຄາດໝາຍເປັນຕົ້ນແມ່ນຂົງເຂດສຶກສາທິການ ແລະ ກິລາ, ຂົງເຂດສາທາລະນະສຸກ; ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ, ຂົງເຂດຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂົງເຂດບັນດາເຜົ່າ, ສາສະໜາ; ຮັບຟັງການລາຍຈາກຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເມືອງ ກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເມືອງ ໃນໄລຍະ 1 ປີຜ່ານມາ ໃນການປະຕິບັດພາລະບົດບາດຂອງສະມາຊິກສະພາປະຊາຊົນແຂວງ ກໍຄືການເປັນຕົວແທນຂອງປະຊາຊົນບັນດາເຜົ່າ. ຈາກນັ້ນ, ບັນດາທ່ານກໍໄດ້ປະກອບຄຳຄິດຄຳເຫັນ ແລະ ຍັງໄດ້ຮັບຟັງການລາຍງານເພີ່ມຕື່ມຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ແລະ ທີມງານ ເພື່ອເຮັດໃຫ້ເນື້ອໃນ ແລະ ຂໍ້ມູນມີຄວາມເປັນເອກະພາບ, ຖືກຕ້ອງ, ຈະແຈ້ງ ແລະ ຮັດກຸມ.

ໂອກາດດຽວກັນນີ້, ຄະນະທີມງານຍັງໄດ້ນຳເອົາໂທລະໂຄ່ງ ມາມອບໃຫ້ອົງການປົກຄອງເມືອງຜົ້ງສາລີ ຈຳນວນ 2 ຊຸດ, ເມືອງບຸນເໜືອ ຈຳນວນ 2 ຊຸດ ເພື່ອນຳໄປມອບໃຫ້ບ້ານທີ່ຍັງຂາດແຄນ ລວມມູນຄ່າທັງໝົດ 10 ລ້ານກວ່າກີບ.

(ນັກຂ່າວ ສພຂ ຜົ້ງສາລີ)

# ສະຫຼຸບຕີລາຄາການກະກຽມດຳເນີນກອງປະຊຸມ ແລະ ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ວັນພະຫັດທີ 6 ເມສາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ສະພາປະຊາຊົນແຂວງໄດ້ຈັດກອງປະຊຸມສະຫຼຸບຕີລາຄາການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ມີຮອງປະທານ, ບັນດາທ່ານໃນຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ທ່ານນາງ ວັນສີ ພວງມະໄລ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານຮ່າງບົດສະຫຼຸບຕີລາຄາການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ສະພາແຫ່ງຊາດ ຊຸດທີ IX ເຊິ່ງບົດສະຫຼຸບດັ່ງກ່າວ ໄດ້ສະແດງອອກໃຫ້ເຫັນດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການກະກຽມດຳເນີນກອງປະຊຸມ ເປັນຕົ້ນດ້ານເນື້ອໃນຂະແໜງກ່ຽວຂ້ອງໄດ້ເອົາໃຈໃສ່ໃນການປະສານງານກັບອົງການປົກຄອງແຂວງ, ບັນດາພະແນກການ, ອົງການ ເຫັນວ່າເຮັດໄດ້ດີ ແລະ ສາມາດນຳເອົາບົດລາຍງານເຂົ້າຜ່ານໃນກອງປະຊຸມ ເພື່ອໃຫ້ບັນດາທ່ານສະມາຊິກສະພາປະຊາຊົນແຂວງຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນຕ່າງໆໃນກອງປະຊຸມຄັ້ງນີ້ໄດ້ຕາມຄາດໝາຍ,ດ້ານບໍລິຫານ-ການເງິນ ແລະ ພິທີການຕ່າງໆ ກໍເຮັດສຳເລັດຕາມທິດຊີ້ນຳຂອງຄະນະປະທານເປັນຢ່າງດີ. ແຕ່ກໍບໍ່ປາສະຈາກດ້ານອ່ອນ-ຂໍ້ຄົງຄ້າງ ໃນການກະກຽມດຳເນີນກອງປະຊຸມ ເປັນຕົ້ນການປະສານງານກັບອົງການປົກຄອງແຂວງ, ບັນດາພະແນກການ, ອົງການ ຍັງບໍ່ທັນກົມກຽວເທົ່າທີ່ຄວນ ເຊິ່ງສະແດງອອກໃນການສົ່ງບົດລາຍງານໃຫ້ທາງສະພາປະຊາຊົນແຂວງຍັງຊັກຊ້າ, ດ້ານເນື້ອໃນ, ໂຕເລກ ແລະ ໂຕຊີ້ວັດຕ່າງໆຍັງບໍ່ກົງກັນ ແລະ ບັນຫາອື່ນໆ.

ກອງປະຊຸມຄັ້ງນີ້, ແມ່ນເພື່ອເປັນການເປີດກວ້າງໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດຄຳເຫັນແລກປ່ຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເພື່ອກຳໄດ້ສາເຫດທີ່ພາໃຫ້ມີດ້ານອ່ອນ-ຂໍ້ຄົງຄ້າງ ແລະ ເພື່ອຊອກຫາວິທີທາງແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ, ເອົາເປັນບົດຮຽນໃຫ້ແກ່ການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມໃນຄັ້ງຕໍ່ໄປ ໃຫ້ລະອຽດເລິກເຊິ່ງ, ໄດ້ຮັບຜົນສຳເລັດຕາມຄາດໝາຍ ແລະ ດີຂຶ້ນກວ່າເກົ່າ.

ຕອນທ້າຍ, ປະທານກອງປະຊຸມໄດ້ເນັ້ນໜັກໃຫ້ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ເອົາໃຈໃສ່ໃນການປະສານສົມທົບກັບບັນດາພະແນກການ, ອົງການ ແລະ ບັນດາເມືອງ ໃຫ້ລະອຽດ, ວ່ອງໄວກວ່າເກົ່າ ເພື່ອເຮັດໃຫ້ການກະກຽມດຳເນີນກອງປະຊຸມ, ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມໃຫ້ທັນຕາມກຳນົດເວລາ.

(ແສງພອນ ອິນນະລົງ)

# ເຊັນບົດບັນທຶກ ລະຫວ່າງ 2 ສະພາປະຊາຊົນແຂວງ ສະຫວັນນະເຂດ ແລະ ກວາງຈີ



(ສພຊ) ເພື່ອເປັນການຜັນຂະຫຍາຍບັນດາເນື້ອໃນບົດບັນທຶກຄວາມຊົງຈໍາລະຫວ່າງສະພາປະຊາຊົນແຂວງສະຫວັນນະເຂດ ສປປລາວ ກັບສະພາປະຊາຊົນແຂວງກວາງຈີ ສສ.ຫວຽດນາມ ໃນປີຜ່ານມາ, ການສະເຫຼີມສະຫຼອງວັນເຊັນສົນທິສັນຍາມິດຕະພາບ, ການຮ່ວມມືຮອບດ້ານລາວ-ຫວຽດນາມ ຄົບຮອບ 46 ປີ (18/7/1977-18/7/2023) ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 61 ປີ (5/9/1962-5/9/2023); ບົນພື້ນຖານນໍ້າໃຈສາມັກຄີ, ໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ ຄະນະປະຈໍາສະພາປະຊາຊົນ 2 ແຂວງສະຫວັນນະເຂດ-ກວາງຈີ ໄດ້ແລກປ່ຽນຂໍ້ມູນ, ຕົ້ນຕໍແມ່ນກ່ຽວກັບສະພາບການຈັດຕັ້ງເຄື່ອນໄຫວວຽກງານໃນຂົງເຂດສະພາປະຊາຊົນຂອງສອງແຂວງ, ແລກປ່ຽນບາງປະສົບການເຄື່ອນໄຫວຂອງຄະນະປະຈໍາສະພາ, ບັນດາຄະນະກໍາມະການ, ຄະນະເລຂາທິການສະພາປະຊາຊົນແຂວງ, ແນໃສ່ປະກອບສ່ວນຍົກສູງຄວາມອາດສາມາດ ແລະ ປະສິດທິພາບໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຕ່ລະແຂວງ ໃນຕໍ່ໜ້າ.

ຕອນບ່າຍວັນທີ 5 ເມສາ 2023 ທີ່ຫ້ອງປະຊຸມຫ້ອງວ່າການແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນຂອງ 2 ສະພາປະຊາຊົນແຂວງ ເຊິ່ງຄະນະຜູ້ແທນສະພາປະຊາຊົນແຂວງສະຫວັນນະເຂດ ນໍາໂດຍສະຫາຍ ກົງແກ້ວ ມົວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈໍາ, ຮອງປະທານຄະນະກໍາມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ; ຝ່າຍຄະນະຜູ້ແທນສະພາປະຊາຊົນແຂວງກວາງຈີ ສສ.ຫວຽດນາມ ນໍາໂດຍສະຫາຍ ເລ ກວາງ ຈ່ຽນ ກໍາມະການຄະນະປະຈໍາພັກແຂວງ, ຮອງປະທານຜູ້ປະຈໍາການສະພາປະຊາຊົນແຂວງກວາງຈີ ສສ.ຫວຽດນາມ ພ້ອມດ້ວຍຄະນະ ມີພະແນກການຂອງແຂວງສະຫວັນນະເຂດ ແລະ ພະນັກງານ-ລັດຖະກອນສະພາປະຊາຊົນແຂວງເຂົ້າຮ່ວມ.

ສະຫາຍ ກົງແກ້ວ ມົວໍລະຈັກ ໄດ້ສະແດງການຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາປະຊາຊົນແຂວງກວາງຈີ ໃນຄັ້ງນີ້ ເຊິ່ງມີຄວາມໝາຍສໍາຄັນ ແລະ ເລິກເຊິ່ງ, ສະແດງເຖິງການຮັດແໜ້ນຄວາມສາມັກຄີທີ່ມີມູນເຊື້ອອັນຍາວນານລະຫວ່າງສອງພັກ-ສອງລັດ ກໍຄືສອງຊາດລາວ-ຫວຽດນາມ ເວົ້າລວມ ເວົ້າສະເພາະກໍຄືສະພາປະຊາຊົນແຂວງສະຫວັນນະເຂດ ກັບສະພາປະຊາຊົນແຂວງກວາງຈີ ຕາມບົດບັນທຶກຊ່ວຍຈໍາທີ່ໄດ້ບັນທຶກຮ່ວມກັນໃນປີ 2017 ຜ່ານມາ. ພ້ອມນັ້ນ, ໄດ້ລາຍງານສະພາບລວມຂອງແຂວງສະຫວັນນະເຂດໂດຍຫຍໍ້ ແລະ ລາຍງານວຽກງານໃນແຕ່ລະດ້ານຂອງສະພາປະຊາຊົນແຂວງ ໃຫ້ສະພາປະຊາຊົນແຂວງກວາງຈີຮັບຊາບ.

ຈາກນັ້ນ, ສະຫາຍ ເລ ກວາງ ຈ່ຽນ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ອໍານວຍຄວາມສະດວກດ້ານຕ່າງໆ ຕໍ່ການມາຢ້ຽມຢາມ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນຂົງເຂດສະພາປະຊາຊົນແຂວງ ໄດ້ລາຍງານສະພາບລວມຂອງແຂວງກວາງຈີໂດຍຫຍໍ້ ແລະ ລາຍງານການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງກວາງຈີ ໃຫ້ສະພາປະຊາຊົນແຂວງສະຫວັນນະເຂດຮັບຊາບ ແລະ ທັງສອງຝ່າຍໄດ້ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆ.

ໂອກາດດຽວກັນນີ້, ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ລົງນາມ ແລະ ເຊັນບົດບັນທຶກຄວາມຊົງຈໍາຮ່ວມກັນກັບສະພາປະຊາຊົນແຂວງກວາງຈີ, ຮ່ວມລົງນາມໃນສັນຍາໂດຍສະຫາຍ ກົງແກ້ວ ມົວໍລະຈັກ ແລະ ສະຫາຍ ເລ ກວາງ ຈ່ຽນ ແລະ ຊ້ອງໜ້າຄະນະຜູ້ແທນທັງສອງຝ່າຍທີ່ເຂົ້າຮ່ວມ.

ທັງສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນກ່ຽວກັບເນື້ອໃນບົດບັນທຶກຄວາມຊົງຈໍາຄື: ສືບຕໍ່ໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນ 2 ແຂວງ ສະຫວັນນະເຂດ-ກວາງຈີ ໃນການແລກປ່ຽນຂໍ້ມູນຂ່າວສານເຊິ່ງກັນແລະກັນ ແນໃສ່ເປັນພື້ນຖານໃຫ້ແກ່ 2 ຝ່າຍໃນການແລກປ່ຽນບົດຮຽນດ້ານວຽກງານວິຊາສະເພາະ ແລະ ຍົກສູງຜົນສໍາເລັດຂອງການຮ່ວມມືໃນຕໍ່ໜ້າ; ສອງຝ່າຍເຫັນດີເປັນເອກະພາບ ຜັດປ່ຽນກັນເປັນເຈົ້າພາບຈັດພິທີພົບປະແລກປ່ຽນບົດຮຽນ 2 ປີ/ຄັ້ງ. ນອກນັ້ນ, ສອງຝ່າຍຍັງສາມາດຈັດຕັ້ງການຢ້ຽມຢາມ ແລະ ເຮັດວຽກຢ່າງບໍ່ເປັນທາງການ ໃນກໍລະນີມີຄວາມຈໍາເປັນ.

ພິທີພົບປະຄັ້ງຕໍ່ໄປຈະຈັດຂຶ້ນຢູ່ແຂວງກວາງຈີ ໃນປີ 2025 ສ່ວນວັນເວລາລະອຽດສອງຝ່າຍຈະໄດ້ປຶກສາຫາລື, ເປັນເອກະພາບຮ່ວມກັນ ແລະ ລາຍງານໃຫ້ກັນຊາບໂດຍຜ່ານພະແນກການຕ່າງປະເທດສອງແຂວງຕື່ມອີກ.




## ວິທີເຮັດວຽກ

ພາກທີ 3

ພະຍາດເປັນແຕ່ປາກ (ຕໍ່)

ສ) ພະຍາດເຮັດຕາມແບບເກົ່າ:

ຜູ້ຕິດພະຍາດຕົວນີ້ ບໍ່ພຽງແຕ່ຂຽນ ຫຼື ເວົ້າຕາມນິດໄສເປັນແຕ່ປາກເທົ່ານັ້ນ, ຈົນເຖິງການອົບຮົມ, ເປີດກອງປະຊຸມກໍມັກຕິດ ແລະ ມີພະຍາດອັນນີ້ຄືກັນ ການເປີດປະຊຸມເປັນການດີທີ່ສຸດຕ້ອງການທີ່ສຸດ ແຕ່ກໍເຂົ້າໃຈວ່າການຮຽນນັ້ນ ບໍ່ແມ່ນເພື່ອແນວອື່ນ, ແມ່ນຮຽນເອົາສິ່ງທີ່ຮຽນໄດ້ນັ້ນ ມາລົງມືເຮັດ, ຮຽນແລ້ວບໍ່ເຮັດນັ້ນ ຈະຮຽນເທົ່າໃດກໍບໍ່ມີປະໂຫຍດ.

ເພາະສະນັ້ນ ການອົບຮົມຕ້ອງຖືກແທດຕົວຈິງ, ເຮັດແນວໃດໃຫ້ຜູ້ທີ່ມາຮຽນນັ້ນ ຮຽນແລ້ວກັບຄືນເມືອທ້ອງຖິ່ນຈະລົງມືເຮັດໄດ້ໂລດ.. ເພື່ອນສະຫາຍພວກເຮົາຫຼາຍຄົນ ຍັງບໍ່ທັນເຂົ້າໃຈເຫດຜົນອັນງ່າຍດາຍນີ້ ເພາະສະນັ້ນ ເຂົາເຈົ້າຈຶ່ງມັກແຕ່ເອົາປັດຊະຍານີ້ ມາສອນໃຫ້ພະນັກງານໃໝ່ທີ່ຫາກໍມາຮຽນຄັ້ງທໍາອິດ, ພຽງແຕ່ເບິ່ງການເປີດກອງປະຊຸມຢູ່ຕາມທ້ອງຖິ່ນແຫ່ງໃດແຫ່ງໜຶ່ງ ພວກເຮົາກໍເຫັນຂໍ້ບົກພ່ອງຫຼາຍຢ່າງດັ່ງລຸ່ມນີ້:

1. ການກຽມພຽງພໍ:

ພວກສະມາຊິກມາຮອດບ່ອນເປີດປະຊຸມແລ້ວ, ແຕ່ຍັງບໍ່ທັນຮູ້ວ່າແມ່ນເພິ່ນຈະເປີດປະຊຸມເພື່ອເວົ້າວຽກອັນໃດ ເມື່ອເຖິງເວລາປະທານກອງປະຊຸມເຊີນທຸກຄົນອອກຄໍາເຫັນ ກໍເລີຍບໍ່ມີຜູ້ໃດເວົ້າ ເພາະບໍ່ທັນເຂົ້າໃຈວ່າຈະເວົ້າເລື່ອງໃດ.

2. ການເວົ້າກວ້າງໄກ:

ຕາມທໍາມະດາ ເມື່ອຊັ້ນສູງລົງໄປຮ່ວມກອງປະຊຸມຊັ້ນນັ້ນ ເວລາເປີດປະຊຸມແລ້ວ ກໍມັກມີແຕ່ຜູ້ແທນຂອງຊັ້ນສູງເວົ້າແຕ່ຜູ້ດຽວເຖິງ 2-3 ຊົ່ວໂມງ, ເວົ້າ ກວ້າງໄກເຖິງຟ້າເຖິງດິນ ເວົ້າໄປທົ່ວທິບ. ແຕ່ວ່າວຽກຕົວຈິງຂອງທ້ອງຖິ່ນ ວຽກທີ່ປະຊາຊົນ ຕ້ອງການຮູ້, ຕ້ອງການເຂົ້າໃຈ ແລະ ຕ້ອງການເຮັດ ຊໍ້າພັດບໍ່ເວົ້າເຖິງຈັກບາດ

3. ບໍ່ຖືກກັບເວລາ:

ນັດປະຊຸມ 8 ໂມງແຕ່ຮອດ 9 ຫຼື 10 ໂມງໂຕເອງຈຶ່ງມາຮອດບ່ອນປະຊຸມ ເຮັດໃຫ້ເສຍເວລາຂອງຜູ້ອື່ນ. ເຮັດແນວນັ້ນ ແມ່ນບໍ່ເຂົ້າໃຈວ່າ: ເຮັດຖືກເວລາແມ່ນນິດໄສອັນດີຂອງນັກປະຕິວັດ ເປັນຕົ້ນແມ່ນໃນເວລາພວມຕໍ່ຕ້ານ.

ອ່ານຕໍ່ສະບັບໜ້າ...

## ຕິດຕາມ...

(ຕໍ່ຈາກໜ້າ 1)

ການທີ່ກ່ຽວຂ້ອງຂອງແຂວງ ແລະ ຜູ້ຕາງໜ້າຈາກບໍລິສັດເຂົ້າຮ່ວມ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການລາຍງານຈາກບໍລິສັດວັງຕັດຂຸດຄົ້ນບໍ່ແຮ່ ກ່ຽວກັບຄວາມຄືບໜ້າແຜນການຈັດຕັ້ງປະຕິບັດການປູກໄມ້ທົດແທນຄືນໂດຍຫຍໍ້ໃຫ້ຊາບວ່າ: ຕາມມະຕິຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 72/ຄປຈ, ລົງວັນທີ 24/03/2022 ໃນການຈັດປະຕິບັດການປູກໄມ້ທົດແທນຄືນເນື້ອທີ່ດິນປ່າໄມ້ທີ່ໄດ້ຮັບອະນຸຍາດຫັນປ່ຽນໃຫ້ບໍລິສັດຂຸດຄົ້ນແຮ່ທາດ, ໃນປັດຈຸບັນບໍລິສັດແມ່ນມີ 4 ເຂດຖອກດິນ ເຊິ່ງກໍາລັງດໍາເນີນການຖອກດິນ; ສະນັ້ນ, ຈຶ່ງບໍ່ທັນສາມາດປູກຕົ້ນໄມ້ໄດ້, ຄາດຄະເນຈະໄດ້ປະຕິບັດໃນໄລຍະທີ 1 ປະມານ 2 ເຮັກຕາ ໂດຍອີງໃສ່ເງື່ອນໄຂສະພາບດິນໃນຂອບເຂດດັ່ງກ່າວໄດ້ມີການປັບລະດັບໃໝ່ບໍ່ທັນໝັ້ນຄົງ ຫຼື ແໜ້ນພໍ, ອຸນນະພູມໃນດິນຕໍ່າ, ສະພາບອາກາດບໍ່ທັນເໝາະສົມໃນຊ່ວງນີ້, ຕາມແຜນຂອງບໍລິສັດແມ່ນຈະໄດ້ປູກຕົ້ນໄມ້ທົ່ວພື້ນທີ່ຂຸດຄົ້ນທັງໝົດ, ຕົ້ນໄມ້ທີ່ຈະປູກແມ່ນຕົ້ນແປກ ແລະ ຕົ້ນອື່ນໆທີ່ເໝາະສົມກັບສະພາບດິນ; ຈາກນັ້ນ, ຍັງໄດ້ຮັບຟັງການລາຍງານຈາກພະແນກການກ່ຽວຂ້ອງ ພ້ອມທັງໄດ້ປຶກສາຫາລື ແລະ ແລກປ່ຽນຮ່ວມກັນຕື່ມອີກ.

ໃນນັ້ນ, ທ່ານ ມີນາພອນ ໄຊສົມພູ ຍັງໄດ້ມີຄໍາເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍຕໍ່ບໍລິສັດໃນການຈັດຕັ້ງປະຕິວຽກງານຜ່ານມາເຊິ່ງເຫັນໄດ້ມີຜົນສໍາເລັດຫຼາຍດ້ານ ແລະ ສະເໜີໃຫ້ບໍລິສັດສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດແຜນການປູກຕົ້ນໄມ້ຕາມມະຕິຂອງຄະນະປະຈໍາສະພາແຫ່ງຊາດ ໃຫ້ມີຜົນສໍາເລັດ.

(ວິນັດ)




# ກົດໝາຍ
# ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ໝວດທີ 1**
**ການຄ້າ ແລະ ການບໍລິການ ກັບຕ່າງປະເທດ**

**ມາດຕາ 11 (ໃໝ່) ການຄ້າ ແລະ ການບໍລິການ ກັບຕ່າງປະເທດ**

ການຄ້າ ແລະ ການບໍລິການ ກັບຕ່າງປະເທດ ແມ່ນການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ/ຫຼື ການບໍລິການຂອງ ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ທີ່ພາໃຫ້ມີທຸລະກຳການຊຳລະເງິນຕາ.

ການບໍລິການ ປະກອບດ້ວຍ ການບໍລິການດ້ານການທ່ອງທ່ຽວ, ສຶກສາ, ສາທາລະນະສຸກ, ປະກັນໄພ, ຂົນສົ່ງ, ໂທລະຄົມມະນາຄົມ, ແຮງງານ ແລະ ການບໍລິການອື່ນ.

**ມາດຕາ 12 (ໃໝ່) ການຊຳລະການຄ້າ ແລະ ການບໍລິການ ກັບຕ່າງປະເທດ**

ຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ທີ່ມີພູມລຳເນົາ ຢູ່ ສປປລາວ ຕ້ອງມີບັນຊີເງິນຝາກສະເພາະ ເພື່ອຮອງຮັບການຊຳລະການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ.

ຜູ້ນຳເຂົ້າ ສິນຄ້າ ແລະ ການບໍລິການຕ້ອງດຳເນີນການຊຳລະຄ່າສິນຄ້າ ແລະ ການບໍລິການ ຜ່ານບັນຊີເງິນຝາກສະເພາະ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ ແລະ ສາມາດສະເໜີຊື້ເງິນຕາຕ່າງປະເທດນຳທະນາຄານ ທຸລະກິດທີ່ຕົນເປີດບັນຊີເງິນຝາກສະເພາະດັ່ງກ່າວ. ທະນາຄານທຸລະກິດ ພິຈາລະນາຂາຍເງິນຕາຕ່າງປະເທດ ຕາມລາຍການສິນຄ້ານຳເຂົ້າບຸລິມະສິດ ແລະ ສອດຄ່ອງກັບເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ຜູ້ສົ່ງອອກສິນຄ້າ ແລະ ການບໍລິການ ຕ້ອງໂອນລາຍຮັບທັງໝົດຈາກການສົ່ງອອກ ເຂົ້າມາ ສປປລາວ ຜ່ານບັນຊີເງິນຝາກສະເພາະ ຢູ່ ສປປລາວ, ພ້ອມທັງຂາຍເງິນຕາຕ່າງປະເທດທີ່ໂອນເຂົ້າບັນຊີດັ່ງກ່າວໃຫ້ທະນາຄານທຸລະກິດທີ່ຕົນເປີດບັນຊີເງິນຝາກສະເພາະນັ້ນ ຕາມລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີຜູ້ສົ່ງອອກສິນຄ້າ ແລະ ການບໍລິການມີຄວາມຈຳເປັນຊຳລະຄ່າວັດຖຸດິບ, ຄ່າອຸປະກອນການຜະລິດ ຫຼື ຄ່າບໍລິການຕິດພັນກັບການຜະລິດ ເພື່ອສົ່ງອອກ ສາມາດສະເໜີຊື້ເງິນຕາຕ່າງປະເທດ ນຳທະນາຄານທຸລະກິດດັ່ງກ່າວ.

ທະນາຄານທຸລະກິດທີ່ໃຫ້ບໍລິການເປີດບັນຊີເງິນຝາກສະເພາະ ຕ້ອງປະຕິບັດຕາມຫຼັກການ, ມາດຕະຖານ ແລະ ເງື່ອນໄຂໃນການຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ຕາມລະບຽບການຂອງທະນາຄານແຫ່ງ ສປປລາວ.

ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດ ຫຼັກການ, ວິທີການ, ເງື່ອນໄຂລວມທັງອັດຕາສ່ວນ ແລະ ເວລາກ່ຽວກັບການຄຸ້ມຄອງລາຍຮັບຈາກການສົ່ງອອກ ແລະ ການສະໜອງເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້າສິນຄ້າ ແລະ ການບໍລິການກັບຕ່າງປະເທດ.

**ໝວດທີ 2**
**ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າ ລະຫວ່າງປະເທດ**

**ມາດຕາ 13 (ໃໝ່) ລາຍຮັບລະຫວ່າງປະເທດ**

ລາຍຮັບລະຫວ່າງປະເທດ ປະກອບດ້ວຍເງິນຊ່ວຍເຫຼືອລ້າ, ລາຍຮັບຂອງຜູ້ອອກແຮງງານ ແລະ ລາຍຮັບອື່ນ. ລາຍຮັບລະຫວ່າງປະເທດ ຕ້ອງໂອນເຂົ້າ-ອອກ ສປປລາວ ຜ່ານຜູ້ໃຫ້ບໍລິການຊຳລະ.

**ມາດຕາ 14 (ປັບປຸງ) ເງິນຊ່ວຍເຫຼືອລ້າລະຫວ່າງປະເທດ**

ເງິນຊ່ວຍເຫຼືອລ້າລະຫວ່າງປະເທດ ແມ່ນເງິນທີ່ຮັບ ຫຼື ໃຫ້ການຊ່ວຍເຫຼືອ ໂດຍບໍ່ມີພັນທະໃຊ້ແທນຄືນ ຊຶ່ງປະກອບດ້ວຍເງິນຊ່ວຍເຫຼືອລ້າຂອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນ.

ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງການເງິນ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງການຊ່ວຍເຫຼືອລ້າຢ່າງລວມສູນ ພ້ອມທັງແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປລາວ.

ເງິນທີ່ໄດ້ຮັບຈາກການຊ່ວຍເຫຼືອລ້າ ຕ້ອງໂອນຜ່ານຜູ້ໃຫ້ບໍລິການຊຳລະເຂົ້າບັນຊີເງິນຝາກຂອງພາກສ່ວນກ່ຽວຂ້ອງທີ່ເປີດນຳທະນາຄານແຫ່ງ ສປປລາວ ຫຼື ທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ, ທະນາຄານທຸລະກິດດັ່ງກ່າວ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປລາວ ຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງໃຫ້ເງິນຊ່ວຍເຫຼືອລ້າແກ່ຕ່າງປະເທດ ຕ້ອງດຳເນີນຜ່ານລະບົບທະນາຄານ ຢູ່ ສປປລາວ.

**ມາດຕາ 15 (ໃໝ່) ລາຍຮັບຂອງຜູ້ອອກແຮງງານ**

ລາຍຮັບຂອງຜູ້ອອກແຮງງານ ປະກອບດ້ວຍ ເງິນເດືອນ ຫຼື ເງິນແຮງງານ, ເງິນໂບນັດ, ເງິນນະໂຍບາຍສະຫວັດດີການ ແລະ ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ.

ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປລາວ ຢ່າງຖືກຕ້ອງຕາມກົດໝາຍ ສາມາດໂອນເງິນລາຍຮັບໄປຕ່າງປະເທດ ຜ່ານຜູ້ໃຫ້ບໍລິການຊຳລະ ດ້ວຍການປະກອບເອກະສານທີ່ກ່ຽວຂ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມການກຳນົດຂອງທະນາຄານແຫ່ງ ສປປລາວ.

ຜູ້ອອກແຮງງານລາວທີ່ອອກໄປເຮັດວຽກຢູ່ຕ່າງປະເທດ ຕ້ອງໂອນເງິນລາຍຮັບເຂົ້າ ສປປລາວ ຜ່ານຜູ້ໃຫ້ບໍລິການຊຳລະທີ່ເປີດບັນຊີເງິນຝາກນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ.

ທະນາຄານທຸລະກິດ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປລາວ ຕາມລະບຽບການ.

**ມາດຕາ 16 (ໃໝ່) ລາຍຮັບອື່ນລະຫວ່າງປະເທດ**

ລາຍຮັບອື່ນລະຫວ່າງປະເທດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຕົ້ນ ລາຍຮັບຈາກການປະກັນໄພ, ຂອງຂວັນ, ເງິນລາງວັນ ຕ້ອງໂອນເຂົ້າ-ອອກ ສປປລາວ ຜ່ານຜູ້ໃຫ້ບໍລິການຊຳລະ.

**ໝວດທີ 3**
**ການລົງທຶນໂດຍກົງລະຫວ່າງປະເທດ**

**ມາດຕາ 17 (ໃໝ່) ການລົງທຶນໂດຍກົງລະຫວ່າງປະເທດ**

ການລົງທຶນໂດຍກົງລະຫວ່າງປະເທດ ແມ່ນການນຳທຶນເຂົ້າມາດຳເນີນທຸລະກິດ ຢູ່ ສປປລາວ ຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ຫຼື ການນຳທຶນອອກໄປລົງທຶນຢູ່ຕ່າງປະເທດຂອງຜູ້ມີພູມລຳເນົາ ຢູ່ ສປປລາວ ຊຶ່ງເຮັດໃຫ້ຜູ້ລົງທຶນກາຍເປັນເຈົ້າຂອງທຸລະກິດຕາມກົດໝາຍ.

ສຳລັບທຶນທີ່ນຳເຂົ້າ ສປປລາວ ນັ້ນ ແມ່ນທຶນທັງໝົດລວມທັງທຶນຈົດທະບຽນ ໃນຮູບແບບທຶນມີເອງ ແລະ/ຫຼື ທຶນກູ້ຢືມ ຊຶ່ງສາມາດນຳເຂົ້າມາເປັນເງິນ ແລະ/ຫຼື ເປັນວັດຖຸ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 18 (ປັບປຸງ) ການນຳທຶນເຂົ້າມາລົງທຶນໂດຍກົງ ຢູ່ ສປປລາວ**

ຜູ້ລົງທຶນຕ່າງປະເທດ ຕ້ອງນຳທຶນຈົດທະບຽນ ແລະ ທຶນທັງໝົດເຂົ້າມາ ສປປລາວ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ. ພາຍຫຼັງໄດ້ແຈ້ງຂຶ້ນທະບຽນວິສາຫະກິດແລ້ວ ຜູ້ລົງທຶນຕ່າງປະເທດ ຕ້ອງເປີດບັນຊີເງິນຝາກສະເພາະ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ ເພື່ອຮອງຮັບເງິນລົງທຶນດັ່ງກ່າວ. ທຸກທຸລະກຳທາງດ້ານການເງິນຂອງຜູ້ລົງທຶນຕ່າງປະເທດ ຕ້ອງດຳເນີນຜ່ານບັນຊີເງິນຝາກສະເພາະເທົ່ານັ້ນ ເປັນຕົ້ນ ການນຳທຶນເຂົ້າ ສປປລາວ; ການໂອນເງິນກຳໄລ, ເງິນປັນຜົນ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ໄປຕ່າງປະເທດ. ໃນກໍລະນີຖືເງິນສົດເຂົ້າມາລົງທຶນ ຕ້ອງມີໃບຢັ້ງຢືນແຈ້ງເງິນສົດຈາກເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ແລະ ເອກະສານທີ່ກ່ຽວຂ້ອງ.

ພາຍຫຼັງນຳທຶນຈົດທະບຽນ ແລະ ທຶນທັງໝົດເຂົ້າ ສປປລາວ ໃນແຕ່ລະຄັ້ງ ຕ້ອງນຳເອກະສານມາຢັ້ງຢືນນຳທະນາຄານແຫ່ງ ສປປລາວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີ່ໄດ້ນຳທຶນເຂົ້າ ສປປລາວ ເປັນຕົ້ນໄປ.

ຜູ້ລົງທຶນຕ່າງປະເທດ ທີ່ຕ້ອງການນຳໃຊ້ເງິນທຶນໃນບັນຊີເງິນຝາກສະເພາະ ຢູ່ ສປປລາວ ຕ້ອງຂາຍເງິນຕາຕ່າງປະເທດໃຫ້ແກ່ທະນາຄານທີ່ຕົນເປີດບັນຊີເງິນຝາກສະເພາະ ແລະ ສາມາດຊື້ເງິນຕາຕ່າງປະເທດນຳທະນາຄານທຸລະກິດດັ່ງກ່າວ ເພື່ອໂອນຊຳລະກັບຕ່າງປະເທດຕາມລະບຽບການຂອງທະນາຄານແຫ່ງສປປລາວ.

ທະນາຄານທຸລະກິດ ທີ່ເປີດບັນຊີເງິນຝາກສະເພາະ ມີໜ້າທີ່ຕິດຕາມການນຳທຶນເຂົ້າ-ອອກ ສປປລາວ ຂອງຜູ້ລົງທຶນ, ລາຍງານໃຫ້ທະນາຄານແຫ່ງ ສປປລາວ ແລະ ປະຕິບັດເງື່ອນໄຂໃນການໃຫ້ບໍລິການ ຕາມລະບຽບການ.

**ມາດຕາ 19 (ປັບປຸງ) ການນຳທຶນອອກໄປລົງທຶນໂດຍກົງຢູ່ຕ່າງປະເທດ**

ຜູ້ມີພູມລຳເນົາ ຢູ່ ສປປລາວ ທີ່ຕ້ອງການນຳທຶນອອກໄປລົງທຶນໂດຍກົງຢູ່ຕ່າງປະເທດ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປລາວ ໂດຍໃຫ້ສອດຄ່ອງກັບນະໂຍບາຍ ແລະ ແຜນການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ.

ຜູ້ມີພູມລຳເນົາ ຢູ່ ສປປລາວ ຕ້ອງເປີດບັນຊີເງິນຝາກສະເພາະ ເພື່ອຮອງຮັບການລົງທຶນນຳທະນາຄານ ທຸລະກິດທີ່ຕັ້ງຢູ່ ສປປລາວ ເພື່ອໂອນເງິນລົງທຶນ ແລະ ລາຍຮັບຈາກການລົງທຶນຢູ່ຕ່າງປະເທດຂອງຕົນກັບຄືນປະເທດ.

ທະນາຄານທຸລະກິດທີ່ໃຫ້ບໍລິການບັນຊີເງິນຝາກສະເພາະເພື່ອຮອງຮັບການລົງທຶນໂດຍກົງຢູ່ຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂທີ່ທະນາຄານແຫ່ງ ສປປລາວ ກຳນົດ.

ລັດຖະບານ ກຳນົດນະໂຍບາຍ ແລະ ສ້າງແຜນການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ ເພື່ອຮັບປະກັນສະຖຽນລະພາບເງິນຕາ ແລະ ຄວາມເຂັ້ມແຂງຂອງຄັງສຳຮອງເງິນຕາຕ່າງປະເທດ.

**ໝວດທີ 4**
**ການລົງທຶນໃນຫຼັກຊັບ**

**ມາດຕາ 20 (ໃໝ່) ການລົງທຶນໃນຫຼັກຊັບ**

ການລົງທຶນໃນຫຼັກຊັບ ແມ່ນການນຳເງິນທຶນເຂົ້າມາລົງທຶນໃນຫຼັກຊັບປະເພດທຶນ ແລະ ປະເພດໜີ້ ຢູ່ ສປປລາວ ຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ຫຼື ການນຳເອົາທຶນໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຜູ້ມີພູມລຳເນົາ ຢູ່ ສປປລາວ.

**ມາດຕາ 21 (ໃໝ່) ການລົງທຶນໃນຫຼັກຊັບ ຢູ່ ສປປລາວ**

ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ທີ່ມີຈຸດປະສົງນຳເງິນທຶນເຂົ້າມາລົງທຶນໃນຫຼັກຊັບ ຢູ່ ສປປລາວ ຕ້ອງເປີດບັນຊີເງິນຝາກນຳທະນາຄານທຸລະກິດ ຢູ່ ສປປ ລາວ ເພື່ອຮອງຮັບການລົງທຶນໃນຫຼັກຊັບ ຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ອ່ານຕໍ່ສະບັບໜ້າ...



# ທຸລະກິດສາຍບຸນ

# ດົ້ນກົບເມກ

ຍຸກເຂົ້າຍາກໝາກແພງ ກ່ອນຈ່າຍເງິນຕ້ອງໄດ້ຄິດຖີ່ຖ້ວນ ຕ້ອງມີສະຕິຄິດກ່ອນຈ່າຍ ໂດຍສະເພາະການໃຊ້ຈ່າຍຊັບທ່ອງທ່ຽວທີ່ແອບແຝງໃນການນຳທ່ຽວສາຍບຸນໄຫວ້ພະສູດມົນ, ສະຖານທີ່ສັກກາລະບູຊາທາງສາສະໜາເຊິ່ງມີທາງສຽງເລົ່າສູ່ຜູ້ຂຽນຟັງວ່າ: ອາດມີບາງຄະນະຈັດທ່ອງທ່ຽວສາຍບຸນ ແອບແຝງປະໂຫຍດເອົາບຸນເອົາສັດທາເປັນໂຕລໍ້ນຳທ່ຽວ ແລ້ວຈະມີວິທີເກັບເງິນເພີ່ມ ຫຼື ໃຫ້ຈ່າຍຄ່າທີ່ພັກເອງເຊິ່ງບໍ່ລວມໃນລາຍການທີ່ໄດ້ກຳນົດໄວ້ ຕົກທ່ານັ່ງລຳບາກຕ້ອງໄດ້ຄວັກກະເປົາໂຕເອງຈ່າຍ.

ທຸລະກິດສາຍບຸນ-ທ່ອງທ່ຽວໄຫວ້ພະສູດມົນສາຍຕ່າງປະເທດ ບາງຄະນະກໍດີ ແຕ່ອາດມີບາງຄະນະ ແອບແຝງອາໄສບຸນ ແລະ ສັດທາບັງໜ້າ ມີການຊັກຊວນອອນເອີ້ນໝູ່ພວກ-ຄົນຮູ້ຈັກກັນ ເບິ່ງຄ້າຍວ່າກິນເປີເຊັນນຳກັນ ເຊິ່ງບາງຄະນະກໍມີພະສົງນຳທາງ ຄົນໄດ້ພັດແມ່ນໂຍມ, ການໄປທ່ຽວຂອງສາຍບຸນ ເຂົາຈະນຳລາຍການສະເໜີທີ່ໄຫວ້ພະບູຊາ-ສະຖານທີ່ທ່ອງທ່ຽວແບບເດີນທາງເປັນຄະນະ ເຊິ່ງມີບອກໄວ້ເຖິງການໃຊ້ຈ່າຍກິນຢູ່ ແຕ່ບາດເວລາໄປຮອດສະຖານທີ່ຕົວຈິງ ມີຫຼາຍລາຍການລູກທີມຕ້ອງໄດ້ຈົກຖົງຈ່າຍເອງ ພາໃຫ້ເກີດສຽງຈົ່ມວິພາກວິຈານວ່າມັນຊິເປັນສາຍບຸນ ຫຼື ສາຍບາບກັນແທ້.

ຜູ້ຂຽນຄິດວ່າ: ການສະແຫວງບຸນນັ້ນເປັນເລື່ອງດີ ແຕ່ຄວນມີສະຕິຢູ່ໃນຂອບເຂດ, ມີປັນຍາຮູ້ແຈ້ງນຳທາງຊີວິດ, ຕາມທີ່ໄດ້ຍິນ, ໄດ້ຮູ້ມາຫຼາຍກໍລະນີ ບາງຄົນຂຶ້ນເໜືອລົງໃຕ້ ເລາະເສຍເຄາະ, ເລາະໄຫວ້ບູຊາ ຫວັງໃຫ້ເກີດໂຊກລາບ, ຫວັງໃຫ້ຫາຍເຄາະເຂັນ ແລະ ພະສົງບາງອົງ ທຳທ່າເປັນຜູ້ຮູ້ຊີ້ຊ້າຍ-ຊີ້ຂວາ, ຫຼາຍກໍລະນີ ພາເຂົ້າຫຼົງທິດທາງ ເພາະຄວນຈະຊີ້ແຈງຫຼັກທຳມະເປັນເຄື່ອງດຳເນີນຊີວິດ ພັດໄປຊີ້ຫາບ່ອນໄຫວ້ບູຊາຂໍພອນໃຫ້ເກີດໂຊກລາບ. ບາດກັບມາເຮືອນ ເສື້ອຜ້າ-ສິ້ນແພກອງຊະຊາຍ; ຄັນວ່າຕັ້ງຫ້ອງບູຊາ ກໍເຮັດປານຖ້ຳເສືອ, ບາງຄົນ ວາງຂັນບູຊາຫຼາຍກວ່າຂັນ 5 ຂັນ 8 ໄຫວ້ທັງພຸດທັງຜີ ໃນຫ້ອງບູຊາດຽວກັນ, ພຸດກໍຢາກໄດ້ ຜີກໍຢາກໄຫວ້ ສຸດທ້າຍຊີວິດກໍເລີຍຂາດຫຼັກ, ຜູ້ທ່ຽວສະແຫວງບຸນກາບໄຫວ້ພະຍັງບໍ່ເປັນ, ບາງຄົນບໍ່ຮູ້ຈັກຮອດພະລັດຕະນະໄຕແມ່ນຫຍັງ.

ສະເໜີແລກປ່ຽນ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຂະໜົບທຳນຽມ | ~~ຂະນົບທຳນຽມ~~ |
| ຈົງຮັກພັກດີ | ~~ຈົ່ງຮັກພັກດີ~~ |
| ຈົ່ງຈະເລີນ | ~~ຈົງຈະເລີນ~~ |
| ຕະຫຼິ່ງ | ~~ຕາລິ່ງ~~ |
| ຕາຝັ່ງ | ~~ຕະຝັ່ງ~~ |
| ຕຳແໜ່ງ | ~~ຕຳແນ່ງ~~ |
| ທະນຸບຳລຸງ | ~~ຖະນຸບຳລຸງ~~ |
| ທະນຸຖະໜອມ | ~~ຖະໜຸຖະໜອມ~~ |

# ຄອງສິບສີ່

\# ໂດຍ: ບົງເອີນ



"ຮີດ" ແລະ "ຄອງ" ມີຄວາມໝາຍໃກ້ຄຽງກັນ ແຕ່ບໍ່ແມ່ນອັນດຽວກັນ ຄຳວ່າ "ຮີດ" ແມ່ນໝາຍເຖິງສິ່ງທີ່ໄດ້ປະພຶດປະຕິບັດກັນມາເປັນເວລາດົນນານ ສ່ວນຄຳວ່າ "ຄອງ" ໝາຍເຖິງລະບຽບ ຫຼື ແນວທາງທີ່ວາງໄວ້ເພື່ອປະຕິບັດຕາມ; ເມື່ອເຮົາເອົາ "ຮີດ" ແລະ "ຄອງ" ມາລວມເຂົ້າກັນ ຈະກາຍເປັນຄຳວ່າ "ຮີດຄອງ" ທີ່ມີຄວາມໝາຍວ່າ: "ແນວທາງການປະພຶດປະຕິບັດທີ່ສືບທອດກັນມາເປັນເວລາດົນນານ"; "ຮີດສິບສອງ ຄອງສິບສີ່" ແມ່ນແນວທາງການປະພຶດປະຕິບັດທີ່ເຈົ້າຟ້າງຸ່ມມະຫາລາດໄດ້ກຳນົດຂຶ້ນພາຍຫຼັງທີ່ທ້ອນໂຮມບັນດາຫົວເມືອງລາວເຂົ້າເປັນອານາຈັກລ້ານຊ້າງ; ເພື່ອໃຫ້ປະຊາຊົນທີ່ເຊື່ອຖືງົມງວາຍໃຫ້ຫັນມານັບຖືສາສະໜາພຸດ ໂດຍມີແນວທາງປະຕິບັດຄື ຮີດສິບສອງ ຄອງສິບສີ່ແທນ; ມື້ນີ້, ເຮົາຈະມານຳສະເໜີກ່ຽວກັບຄອງສິບສີ່ທີ່ໝາຍເຖິງຂໍ້ກຳນົດ 14 ຂໍ້ທີ່ປະຊາຊົນລາວເຮົາ ຖືເປັນທຳນຽມປະຕິບັດມາຕັ້ງແຕ່ດົນນານ ແລະ ໃນປັດຈຸບັນກໍຍັງເຊື່ອຖືຢູ່ ແຕ່ອາດຈະບໍ່ເຂັ້ມງວດ ຫຼືບາງຂໍ້ ໃນບາງທ້ອງຖິ່ນກໍປ່ອຍວາງໄປແລ້ວ. ຄອງສິບສີ່ມີຄື:

1. ຢ່າຢຽບເງົາຂອງພະສົງ ຫຼື ຜູ້ມີສິນບໍລິສຸດ

2. ຢ່າເອົາອາຫານເຫຼືອ ຫຼືເດື່ອນ ໄປໃຫ້ພະສົງສັນ

3. ຢ່າເສບກາມະຄຸນໃນມື້ວັນສິນ, ວັນເຂົ້າພັນສາ, ວັນມາຄະບູຊາ, ວັນວິສາຂະບູຊາ ແລະ ວັນກຸດສົງການຢ່າງເດັດຂາດ.

4. ເມື່ອພະສົງກາຍມາໃຫ້ນັ່ງລົງ, ນົບມືໄຫວ້ແລ້ວຈຶ່ງຄ່ອຍຍ່າງກາຍ ຫຼື ຈຶ່ງຄ່ອຍລົມນຳເພິ່ນ.

5. ມື້ພະສົງເຂົ້າກຳໃຫ້ມີດອກໄມ້ທູບທຽນ ແລະ ເຄື່ອງບໍລິຂານໄປທານຮ່ວມເພິ່ນ.

6. ກ່ອນຈະເຂົ້ານອນໃຫ້ອາບນໍ້າ ຫຼື ລ້າງຕີນເສຍກ່ອນ

7. ເມື່ອເຖິງວັນສິນດັບ-ສິນເພັງ ໃຫ້ເຮັດບຸນໃສ່ບາດ ຫຼື ນິມົນພະສົງມາສູດມຸງຄຸນເຮືອນ.

8. ເມື່ອເຖິງວັນສິນເພັງ ໃຫ້ແຕ່ງຂັນດອກໄມ້ທູບທຽນໄປສົມມາຜົວຂອງຕົນ

9. ເມື່ອພະສົງສາມະເນນມາບິນທະບາດ ຢ່າໃຫ້ເພິ່ນຄອຍຖ້າ, ເວລາປ່ອນບາດຢ່າໃຫ້ມີຊຸນບາດ ຫຼື ຊູນຖືກພະສົງສາມະເນນ, ຍາມປ່ອນບາດຢ່າໃສ່ໝວກ, ຢ່າເອົາຜ້າປົກຫົວ, ຢ່າໃສ່ເກີບ, ຢ່າອຸ້ມເດັກນ້ອຍ, ຢ່າຖືມີດຖືພ້າຫຼືຢ່າຖືອາວຸດໃດໆ.

10. ເມື່ອຮອດວັນສິນ 8 ຄໍ່າ, 14 ຫຼື 15 ຄໍ່າ ໃຫ້ພາກັນສົມມາກ້ອນເສົ້າ, ແມ່ຂັ້ນໄດ ແລະ ປະຕູເຮືອນ (ປັດຈຸບັນ ຢູ່ຊົນນະບົດບາງບ່ອນຍັງປະຕິບັດຢູ່).

11. ກ່ອນຈະຂຶ້ນເຮືອນ ໃຫ້ລ້າງຕີນສາກ່ອນ.

12. ໃຫ້ພາກັນເຮັດຮົ້ວອ້ອມວັດ ແລະ ບ້ານເຮືອນຂອງຕົນໃຫ້ດີ.

13. ເມື່ອເຖິງລະດູການເກັບກ່ຽວຜົນລະປູກຢ່າຟ້າວກິນກ່ອນ ໃຫ້ເອົາໄປເຮັດບຸນໃຫ້ທານແກ່ຜູ້ມີສິນກ່ອນ ແລ້ວຈຶ່ງຄ່ອຍກິນ (ຕົວຢ່າງ: ຍາມເຂົ້າໃໝ່ ກໍເອົາໄປບູຊາ ຫຼື ໃສ່ບາດກ່ອນ, ແລ້ວຈຶ່ງຄ່ອຍກິນ).

14. ຢ່າພາກັນລັກໂລບຕາຊິງ, ຢ່າພາກັນຈ່າຍເງິນແດງ ແປງເງິນຄວ່າງ, ຢ່າກ່າວຄຳຫຍາບຊ້າ ກ້າແຂງ ຕໍ່ກັນ ແລະ ກັນ.





## ສຸກສະບາຍຫາຍໂຣຄາ

# ກະຕຸ້ນການຂັບຖ່າຍດ້ວຍວິທີງ່າຍໆ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ທ່ານເຄີຍມີບັນຫາຖ່າຍບໍ່ອອກ ຫຼື ອາຈົມແກ່ນ ຈົນເຮັດໃຫ້ຖ່າຍລຳບາກ ຕ້ອງນັ່ງຢູ່ໃນຫ້ອງນ້ຳເປັນຊົ່ວໂມງບໍ ເຊິ່ງບັນຫາມັກເກີດຈາກລະບົບຍ່ອຍອາຫານ; ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີວິທີຊ່ວຍໃຫ້ລະບົບຍ່ອຍອາຫານ ເຮັດວຽກໄດ້ຢ່າງເປັນປົກກະຕິ ໂດຍສະເພາະຊ່ວຍໃນການຂັບຖ່າຍຕອນເຊົ້າຂອງທຸກໆມື້ ດ້ວຍ 5 ວິທີທີ່ຢາກແນະນຳໃຫ້ໄດ້ລອງດັ່ງຕໍ່ໄປນີ້:

**1. ດື່ມນ້ຳທັນທີຫຼັງຈາກຕື່ນນອນ.**

ເພື່ອກະຕຸ້ນການຂັບຖ່າຍຂອງລຳໄສ້ໃນຕອນເຊົ້າ ແນະນຳໃຫ້ດື່ມນ້ຳ 1 ຈອກ ທັນທີຫຼັງຈາກຕື່ນນອນ ເຊິ່ງໝາຍຄວາມວ່າດື່ມນ້ຳກ່ອນທີ່ຈະລ້າງໜ້າ ແລະ ຖູແຂ້ວ ວິທີນີ້ແມ່ນການລ້າງລຳໄສ້ທີ່ດີ ເພາະການດື່ມນ້ຳໃນໄລຍະເວລາທີ່ທ້ອງວ່າງຢູ່ ຈະເປັນການທຳຄວາມສະອາດລຳໄສ້ ແລະ ກະຕຸ້ນລຳໄສ້ຕາມທຳມະຊາດ ເຮັດໃຫ້ຂັບຖ່າຍເປັນປົກກະຕິ ທັງຍັງເປັນການລ້າງສານພິດ ຫຼື ສິ່ງເສດເຫຼືອທີ່ຕົກຄ້າງໃນຮ່າງກາຍນຳອີກ.

**2. ດື່ມນ້ຳອຸ່ນປະສົມນ້ຳໝາກນາວ.**

ແນະນຳໃຫ້ດື່ມຕອນເຊົ້າເວລາທີ່ທ້ອງວ່າງ ຈະຊ່ວຍກະຕຸ້ນການຂັບຖ່າຍໄດ້ດີ ເນື່ອງຈາກນ້ຳໝາກນາວຈະກະຕຸ້ນໃຫ້ລຳໄສ້ໃຫ້ເກີດການບີບຮັດແລະ ຖ້າດື່ມນ້ຳອຸ່ນປະສົມນ້ຳໝາກນາວ ຈະຊ່ວຍກະຕຸ້ນໃຫ້ລຳໄສ້ເຮັດວຽກໄດ້ດີຍິ່ງຂຶ້ນ.

**3. ດື່ມນົມສົ້ມ.**

ການດື່ມນົມສົ້ມທີ່ມີປະໂຫຍດຕໍ່ການຂັບຖ່າຍ ແມ່ນໄລຍະເວລາ 5-7 ໂມງເຊົ້າ ເພາະລຳໄສ້ໃຫຍ່ກຳລັງເຮັດວຽກ ແລະ ເລືອກດື່ມນົມສົ້ມທີ່ບົ່ມດ້ວຍຈຸລິນຊີທຳມະຊາດ ຈະຊ່ວຍເຮັດໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ດີ ໂດຍສະເພາະເພື່ອກະຕຸ້ນລະບົບຍ່ອຍອາຫານໃນຕອນເຊົ້າ ຈະຊ່ວຍແກ້ໄຂບັນຫາຖ່າຍຍາກໄດ້ເປັນຢ່າງດີ.

**4. ໂຍຄະເບົາ**

ສຳລັບທ່ານທີ່ມັກອອກກຳລັງກາຍ ແນະນຳໃຫ້ເຮັດຫຼິ້ນໂຍຄະແບບເບົາໆໃນຕອນເຊົ້າ ວິທີການນີ້ຍັງຊ່ວຍກະຕຸ້ນລະບົບຂັບຖ່າຍໄດ້ ເນື່ອງຈາກວ່າໂຍຄະຊ່ວຍຜ່ອນຄາຍກ້າມຊີ້ນ ແລະ ປັບສົມດຸນໃນຮ່າງກາຍ ທັງກະຕຸ້ນການເຮັດວຽກຂອງລຳໄສ້ນຳອີກ ດັ່ງນັ້ນ, ຈຶ່ງຊ່ວຍໃຫ້ຂັບຖ່າຍສະດວກ.

**5. ຂັບຖ່າຍໃນທ່ານັ່ງທີ່ຖືກຕ້ອງ.**

ການນັ່ງໃນທ່າທີ່ຖືກຕ້ອງ ສາມາດຊ່ວຍກະຕຸ້ນການເຮັດວຽກຂອງລຳໄສ້ໃນຕອນເຊົ້າ ທ່ານັ່ງທີ່ເໝາະສົມສຳລັບການຂັບຖ່າຍແມ່ນນັ່ງຢ່ອງຍໍ້ ໂດຍທີ່ຫົວເຂົ່າຕ້ອງຢູ່ສູງກວ່າກະໂພກ ແຕ່ເນື່ອງຈາກລັກສະນະຂອງຫ້ອງນ້ຳ ທ່ານັ່ງໃນການຂັບຖ່າຍຕ້ອງນັ່ງຕັ້ງສາກ 90 ອົງສາ ດັ່ງນັ້ນ, ແນະນຳໃຫ້ວາງຕັ່ງມາຢອງຢູ່ທາງໜ້າ ເພື່ອວາງຕີນ ແລະ ເພື່ອໃຫ້ຫົວເຂົ່າຢູ່ສູງກວ່າກະໂພກ ໃນມຸມ 35 ອົງສາ ແລະ ອຽງໄປທາງໜ້າເລັກນ້ອຍ ທ່ານັ່ງນີ້ ຈະຊ່ວຍໃຫ້ຂັບຖ່າຍງ່າຍຂຶ້ນ ຖືວ່າເປັນການກະຕຸ້ນການຂັບຖ່າຍໃນຕອນເຊົ້າທີ່ຄວນທົດລອງ.

www.sanook.com




## ຮອຍເປື້ອນທີ່ຝັງໃນ

# ໂດຍ: ຮຸ່ງອາລຸນ ແດນວິໄລ

※ ຄັນວ່າ ເປັນໜ່ວຍແກ້ວ ແນວຮຸ່ງແສງໃສ
ເຈຍແຕ່ງ ເປັນຫົວແຫວນ ແຮ່ງເຮືອງເມືອໜ້າ
ຕ່າງຈາກ ເອົາຫີນກ້ອນ ເຈຍຈົນມືເມື່ອຍ
ແສງບໍ່ເຮືອງຮຸ່ງໄດ້ ຄືແກ້ວຄ່າແພງ

※ ຊາດວ່າ ເປັນໜ່ວຍຍ້ອມ ປອມຈາກພຽງຫີນ
ສີລອກມາແນມເຫັນ ປ່ອນເປັນຮອຍຮ້າຍ
ໃຜຫາກຍັງເອົາເອ້ ອາຍຄົນຫຼຽວເບິ່ງ
ຫາລະຖອນຖອດຖິ້ມ ລົງນ້ຳແມ່ຂອງ

※ ຄົນຈອງຫອງຫາກໄດ້ ຕຳແໜ່ງແນວດີ
ກໍສໍ່າເປັນມະນີປອມ ແຕ່ງສີເສີມຫຸ້ມ
ກຸມວ່າເປັນຫົວແກ້ວ ແນວແພງລືເລີດ
ຢ້ານເກີດເປັນຕ່ອນຮ້າຍ ພາຍໜ້າຍາກນຳ

※ ສໍ່າເອົາ ແພດ່າງເປື້ອນ ກອງເກື່ອນກາງເຮືອນ
ແລ້ວເລົ່າພີແພຂາວ ຫົ່ຮົງຮຽງຫຸ້ມ
ບັດວ່າແພດຳຮ້າຍ ປັນລາຍລົງໃສ່
ແພທີ່ຮົງຫົ່ຫຸ້ມ ປົນເປື້ອນປຽກນຳ

※ ຄັນຫາກຄຳເງື່ອນພົ້ ຮອຍດ່າງແພໃດ
ໃຫ້ຄ່ອຍຊາວມືໝາຍ ຟອກຟອງໄລລ້າງ
ຄັນອອກແຮງໄລແລ້ວ ຍັງເໜັນໝາງເນົ່າ
ຖືວ່າໄລບໍ່ໄດ້ ໂຍນຖິ້ມໃສ່ໄຟ ສານາ!



## ທັກທາຍ ສະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສາວຈົ້ມ

*※ 13 ເມສາ ສະຖານີລົດໄຟ ເປີດມິຕິໝາຍໃໝ່ ຄື ໄດ້ເປີດບໍລິການ ຂົນສົ່ງຜູ້ໂດຍສານລະຫວ່າງປະເທດ ຈາກສະຖານີ**ຄຸນໝິງ**ໃຕ້ ໄປຫາ**ນະຄອນຫຼວງວຽງຈັນ** ໃນນັ້ນ, ໄດ້ຢຸດຈອດ ແລະ ຜ່ານ **8 ສະຖານີ** ຄື ຄຸນໝິງໃຕ້, ພູເອີ, ສິບສອງພັນນາ, ບໍ່ຫານ, ບໍ່ເຕັນ, ຫຼວງພະບາງ, ວັງວຽງ ແລະ ນະຄອນຫຼວງວຽງຈັນ ທັງໝົດນັ້ນໃຊ້ເວລາ 10 ຊົ່ວໂມງ ເທດການນີ້ບອກແຈ້ງ ຖະແຫຼງກ່າວຂ່າວໄຊ ວ່າ ລົດໄຟລາວ-ຈີນ ເປີດໄກກວມກ້ວາງ ສະດວກສະບາຍ ຫຼາຍດ້ານ ໃນການເດີນທາງທ່ອງທ່ຽວ ທຽວລາວ-ຈີນ **ນີ້ລະຄັ້ງ** ຈາກຄຸນໝິງ-ນະຄອນຫຼວງວຽງຈັນແລ່ນລີ້ວ ກຽມພ້ອມທ່ຽວສະບາຍ **ທ່ານເອີຍ!***

*※ **ໄລ**ຍະສະເຫລີມສະຫຼອງສົ່ງທ້າຍປີເກົ່າ ແລະ ຕ້ອນຮັບປີໃໝ່ລາວ ມີຂ່າວແຈ້ງໃຫ້ຮູ້ວ່າ ເລີ່ມແຕ່ **11-17 ເມສາ** ທົ່ວປະເທດມີອຸບັດເຫດເກີດຂຶ້ນ **342 ກໍລະນີ** ມີພາຫະນະເປ່ເພ **589 ຄັນ** ໃນນັ້ນ, ມີຜູ້ບາດເຈັບ **11 ຄົນ** ແລະ ເສຍຊີວິດ **35 ຍິງ 6** ເຈົ້າໜ້າທີ່ຍັງແຈ້ງໃຫ້ຮູ້ຕື່ມອີກວ່າ ໃນ 3 ວັນຄື **14-16 ເມສາ** ທົ່ວປະເທດມີອຸບັດເຫດ **194 ກໍລະນີ** ໂອກາດນີ້ເພີ່ນຈຶ່ງໄດ້ ຮຽກຮ້ອງມາຍັງ ຜູ້ໃຊ້ລົດໃຊ້ຖະໜົນຫົນທາງ ລະບຽບກົດຈະລາຈອນເນັ້ນ ເລື່ອງຄວາມໄວໃຫ້ຄຸມເຂັ້ມ ແອວກໍຮໍບໍ່ຄວນດື່ມ ເພາະການເມົາແລ້ວຂັບ ບັກຂັບ ຂີ້ດີເຮັດບໍ່ໄດ້ ບໍ່ປ່ອຍສິດ ອາດເຮັດໃຫ້ເສຍຫາຍດ້ານດັ່ງເຫັນ **ນັ້ນແລ້ວ!***

## ຊອບຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ຍ້ອນບໍ່ມີຄືກັນ**

ທ້າວເອນຖາມທ້າວແອ

- ແອມຶງຮູ້ບໍ່ວ່າເປັນຫຍັງໄກ່ຜູ້ຈຶ່ງບໍ່ມີນົມ?
- ກູຊິໄປຮູ້ຫວະ! ມຶງວ່າເປັນຫຍັງຊັ້ນ
- ເພາະໄກ່ແມ່ບໍ່ມີນົມ
- !!!!



## ຄະຕິເຕືອນໃຈ

# ດອກສະຍອມ

ເຮືອນບໍ່ມີສີໜ້າ ກາບິນມາມັນຊິລ່ອງ
ເຮືອນບໍ່ມີພໍ່ຢ້າວ ໂຈນຊິເຂົ້າລັກຂອງ




# ກຳມະກອນ – ກຳມະບານ

"ລຸງຄຳ, ມື້ນີ້ວັນກຳມະກອນສາກົນ ບໍ່ໄດ້ໄປທາງໃດບໍ?"

"ບໍ່ໄດ້ໄປທາງໃດ, ພັກຜ່ອນຢູ່ເຮືອນ. ຫຼານເດ, ບໍ່ມີແຜນໄປທ່ຽວໃສບໍ?"

"ຄືກັນຫັ້ນລະ, ລຸງ! ບໍ່ຢາກໄປທາງໃດ ຢ້ານຕິດໂຄວິດ." ບຸນຍືນທັງເວົ້າທັງແປງຜ້າອັດປາກໃຫ້ເຂົ້າທີ່ເຂົ້າທາງ ແລະ ກໍເວົ້າຕໍ່ວ່າ "ມາຫາລຸງມື້ນີ້ ກໍມີແນວລົບກວນຖາມລຸງເລື່ອງຄຳສັບ 'ກຳມະກອນ' ແລະ 'ກຳມະບານ' ມີຄວາມໝາຍຕ່າງກັນແນວໃດ?"

ພໍແຕ່ຄຳຖາມນີ້ສິ່ງກະແສຄື້ນເຂົ້າຫູ, ລຸງຄຳກໍອ້າປາກອະທິບາຍຄວາມໝາຍສອງຄຳນີ້ສູ່ບຸນຍືນຟັງທັນທີ:

'ກຳມະກອນ' ເປັນຄຳນາມຈາກເຄົ້າປາລີ ປະກອບດ້ວຍຄຳວ່າ Kamma (ກັມມະ) ສະກົດຄຳແບບປັດຈຸບັນເປັນ 'ກຳມະ' ໝາຍເຖິງ "ການກະທຳ, ສິ່ງທີ່ເຮັດ, ວຽກງານ" ແລະ Kara (ກະຣະ) ແຜງເປັນ 'ກອນ' ໝາຍເຖິງ "ຜູ້ເຮັດ, ມື, ອະໄວຍະວະທີ່ເຮັດວຽກ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ກຳມະກອນ' ກໍໄດ້ຄວາມໝາຍວ່າ "ຜູ້ເຮັດວຽກ, ຜູ້ຮັບຈ້າງເຮັດວຽກ, ຊາວຜູ້ອອກແຮງງານ" ເຊັ່ນ

- ດວງເຮັ້ງກຳເນີດມາຈາກຊົນຊັ້ນກຳມະກອນ.
- ພໍ່ຂອງລາວເປັນກຳມະກອນຢູ່ໂຮງງານຕັດຫຍິບແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ.
- ພັນທະພາບກຳມະກອນ-ຊາວນາໝັ້ນຄົງຂະໜຶງແກ່ນ ບໍ່ມີສິ່ງໃດຈະມາຕັດແຍກໄດ້.

'ກຳມະບານ' ເປັນຄຳນາມຈາກເຄົ້າປາລີ ປະກອບດ້ວຍຄຳວ່າ Kamma (ກັມມະ) ສະກົດຄຳແບບປັດຈຸບັນເປັນ 'ກຳມະ' ໝາຍເຖິງ "ການກະທຳ, ສິ່ງທີ່ເຮັດ, ວຽກງານ" ແລະ Pāla (ປາລະ) ແຜງເປັນ 'ບານ' ໝາຍເຖິງ "ລ້ຽງ, ຄຸ້ມຄອງ, ປ້ອງກັນ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ກຳມະບານ' ແປຕາມໂຕແມ່ນໝາຍເຖິງ "ຜູ້ຄຸ້ມຄອງແຮງງານ". ແຕ່ເມື່ອນຳໃຊ້ໃນຊີວິດສັງຄົມ 'ກຳມະບານ' ກໍໝາຍເຖິງ "ການຈັດຕັ້ງໜຶ່ງທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງກຳມະກອນ ແລະ ຊາວຜູ້ອອກແຮງງານ" ເຊັ່ນ

- ອ້າຍຂ້ອຍເປັນສະມາຊິກກຳມະບານຢູ່ໂຮງງານຜະລິດສັງກະສີ.
- ທອງສີເປັນຫົວໜ້າສະຫະພັນກຳມະບານວິທະຍາໄລຄູ.
- ກຳມະກອນຢູ່ໂຮງງານແຫ່ງນີ້ ລ້ວນແຕ່ເປັນສະມາຊິກກຳມະບານ.

ຢູ່ໃນກົດໝາຍວ່າດ້ວຍກຳມະບານລາວ ປີ 2007 ໄດ້ໃຫ້ຄວາມໝາຍ 'ກຳມະບານລາວ' ວ່າ "ກຳມະບານລາວແມ່ນອົງການຈັດຕັ້ງມະຫາຊົນໜຶ່ງທີ່ກວ້າງຂວາງໃນລະບົບການເມືອງຂອງລະບົບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນຕົວແທນໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກກຳມະບານ, ກຳມະກອນ ແລະ ຊາວຜູ້ອອກແຮງງານ".

# ສະຫຼຸບລວມແລ້ວ, 'ກຳມະກອນ' ແລະ 'ກຳມະບານ' ສອງຄຳນີ້ມີຄວາມໝາຍກ່ຽວພັນກັນ: 'ກຳມະກອນ' ໝາຍເຖິງ "ຊາວຜູ້ອອກແຮງງານ", ສ່ວນ 'ກຳມະບານ' ໝາຍເຖິງ "ການຈັດຕັ້ງທີ່ຄຸ້ມຄອງ-ປົກປ້ອງສິດຜົນປະໂຫຍດຂອງກຳມະກອນ ຫຼື ຊາວຜູ້ອອກແຮງງານ".

# ປະທານາທິບໍດີຝຣັ່ງ ລົງນາມຮ່າງກົດໝາຍປະຕິຮູບເງິນບຳນານ





ປະທານາທິບໍດີ ເອັມມານູເອລ ມາຄຣົງ ຂອງຝຣັ່ງ ລົງນາມຮັບຮອງຮ່າງກົດໝາຍປະຕິຮູບເງິນບຳນານທີ່ຂະຫຍາຍອາຍຸຂອງຜູ້ທີ່ມີສິດຮັບເງິນບຳນານຈາກ 62 ເປັນ 64 ປີ ຫຼັງສະພາລັດຖະທຳມະນູນມີມະຕິເຫັນດີຕາມຮ່າງກົດໝາຍດັ່ງກ່າວໃນທ້າຍອາທິດຜ່ານມາ, ເຖິງວ່າຈະມີເຫດຊຸມນຸມປະທ້ວງໃຫຍ່ເກີດຂຶ້ນໃນຫຼາຍເມືອງສຳຄັນທົ່ວປະເທດກໍຕາມ.

ໂດຍສະມາຊິກສະພາລັດຖະທຳມະນູນ ທັງ 9 ທ່ານ ມີມະຕິເຫັນດີຕໍ່ຮ່າງກົດໝາຍດັ່ງກ່າວທີ່ຊຸກຍູ້ໂດຍລັດຖະບານທ່ານ ເອັມມານູເອລ ມາຄຣົງ ໂດຍສະເພາະບັນຫາການເພີ່ມອາຍຸບຳນານເປັນ 64 ປີ ແລະ ການຂະຫຍາຍອາຍຸການເຮັດວຽກທີ່ຈຳເປັນສຳລັບຜູ້ທີ່ຕ້ອງການຮັບເງິນບຳນານເຕັມຈຳນວນເປັນ 43 ປີ.

ຂະນະທີ່ຂໍ້ສະເໜີເລັກນ້ອຍປະມານ 6 ຂໍ້ໄດ້ຮັບການປະຕິເສດ ເຊິ່ງລວມທັງການບັງຄັບໃຫ້ບໍລິສັດຂະໜາດໃຫຍ່ປະກາດຈຳນວນພະນັກງານທີ່ອາຍຸຫລາຍກວ່າ 55 ປີທີ່ພວກເຂົາຈ້າງວຽກ ແລະ ການອອກແບບສັນຍາພິເສດສຳລັບພະນັກງານທີ່ມີອາຍຸຫຼາຍກວ່າເກນດັ່ງກ່າວ.

ປະຊາຊົນຝຣັ່ງຈຳນວນຫຼາຍລວມກັນຊຸມນຸມປະທ້ວງນັບແຕ່ກ່ອນສະພາລັດຖະທຳມະນູນຈະມີມະຕິຮັບຮອງແຜນປະຕິຮູບເງິນບຳນານສະບັບນີ້, ພ້ອມສະແດງຈຸດຢືນວ່າ: ພວກເຂົາບໍ່ເຫັນພ້ອມ ແລະ ບໍ່ຕ້ອງການກົດໝາຍນີ້.

ໂດຍກະແສຄວາມບໍ່ພໍໃຈຮຸນແຮງຂຶ້ນ ຫຼັງຈາກທ່ານ ເອລິຊາເບ ບອນ ນາຍົກລັດຖະມົນຕີຝຣັ່ງ ໃຊ້ອຳນາດພິເສດຕາມລັດຖະທຳມະນູນຜ່ານຮ່າງກົດໝາຍດັ່ງກ່າວ ໂດຍບໍ່ຜ່ານການລົງມະຕິເຫັນດີຈາກລັດຖະສະພາຝຣັ່ງ ໃນເດືອນມີນາຜ່ານມາ ສ້າງກະແສການປະທ້ວງໃຫຍ່ທົ່ວປະເທດ.

ຂະນະທີ່ສະຫະພາບແຮງງານຝຣັ່ງ ລະບຸວ່າ: ພວກເຂົາເຄົາລົບການຕັດສິນໃຈຂອງສະພາລັດຖະທຳມະນູນ, ແຕ່ຈະຍັງເດີນໜ້າປະທ້ວງໃຫຍ່ ເພື່ອຮຽກຮ້ອງໃຫ້ທ່ານ ເອັມມານູເອລ ມາຄຣົງ ແລະ ລັດຖະບານຝຣັ່ງ ຍົກເລີກກົດໝາຍນີ້. ພ້ອມຮຽກຮ້ອງໃຫ້ພີ່ນ້ອງແຮງງານຊາວຝຣັ່ງທົ່ວປະເທດພ້ອມໃຈກັນອອກມາສະແດງພະລັງຄັ້ງໃຫຍ່ໃນວັນກຳມະກອນ 1 ພຶດສະພາທີ່ຈະເຖິງນີ້.

# ລາງວັນເຊີດຊູກຽດສູງສຸດຂອງເຢຍລະມັນ



ທ່ານ ນາງ ອັງເກລາ ແມເຄິລ ອະດີດນາຍົກລັດຖະມົນຕີຂອງເຢຍລະມັນ ເຂົ້າຮັບລາງວັນເຊີດຊູກຽດສູງສຸດຂອງປະເທດ "Order of Marit" ຈາກທ່ານ ຟຣັງ-ວັລເທີ ຊຕາໄນເອີ ປະທານາທິບໍດີເຢຍລະມັນ ຢູ່ທຳນຽບປະທານາທິບໍດີໃນນະຄອນຫຼວງເບີລິນ ປະເທດເຢຍລະມັນ ໃນວັນທີ 17 ເມສາຜ່ານມາ, ຖືເປັນນາຍົກລັດຖະມົນຕີ ຄົນທີ 3 ຂອງເຢຍລະມັນທີ່ໄດ້ຮັບລາງວັນອັນຊົງກຽດນີ້ ຕໍ່ຈາກທ່ານ ຄອນຣາດ ອາເດີເນົາເອີ ແລະ ທ່ານ ເຮລມຸດ ໂຄລ.

ທ່ານ ນາງ ອັງເກລາ ແມເຄິລ ໄດ້ຊື່ວ່າເປັນ "ນາຍົກຍິງເຫຼັກແຫ່ງເຢຍລະມັນ" ກຳອຳນາດບໍລິຫານປະເທດມາຍາວນານກວ່າ 16 ປີ ນັບແຕ່ທ້າຍປີ 2005-2021 ອີກທັງຍັງດຳລົງຕຳແໜ່ງຜູ້ນຳພັກຄຣິສຕຽນເດໂມເຄຣຕິກຢູນຽນ (CDU) ນັບແຕ່ປີ 2000-2018 ຖືເປັນໜຶ່ງໃນຜູ້ນຳປະເທດທີ່ດຳລົງຕຳແໜ່ງຍາວນານທີ່ສຸດໃນປະຫວັດສາດການເມືອງເຢຍລະມັນ.

ໂດຍທ່ານ ນາງ ອັງເກລາ ແມເຄິລ ເປັນນາຍົກລັດຖະມົນຕີຍິງຄົນທຳອິດ ແລະ ພຽງຄົນດຽວຂອງເຢຍລະມັນໃນປັດຈຸບັນ, ທ່ານມີບົດບາດສຳຄັນຫຼາຍໃນຖານະເສົາຫຼັກຂອງສະຫະພາບເອີຣົບ ແລະ ທ່ານຍັງໄດ້ຮັບການຈັດອັນດັບໃຫ້ເປັນ "ບຸກຄົນແຫ່ງປີ" (Person of the Year) ລວມທັງ "ຜູ້ຍິງທີ່ມີອິດທິພົນທີ່ສຸດໃນໂລກ" (Most Powerful Woman) ຫຼາຍຄັ້ງໃນໄລຍະທີ່ທ່ານຍັງດຳລົງຕຳແໜ່ງຜູ້ນຳຂອງເຢຍລະມັນ.

ການຕັດສິນໃຈກ້າວລົງຈາກຕຳແໜ່ງຜູ້ນຳປະເທດຂອງທ່ານໃນປີ 2021 ສົ່ງຜົນໃຫ້ຫຼາຍຝ່າຍກັງວົນເຖິງຄວາມໝັ້ນຄົງ ແລະ ສະຖຽນລະພາບຂອງສະຫະພາບເອີຣົບໃນຍຸກຫຼັງທ່ານ ນາງ ອັງເກລາ ແມເຄິລ ເຊິ່ງທ່ານ ໂອລາບ ໂຊລ ນາຍົກລັດຖະມົນຕີເຢຍລະມັນທີ່ກ້າວຂຶ້ນມາຮັບໜ້າທີ່ຕໍ່ ມັກໄດ້ຮັບສຽງວິພາກວິຈານວ່າເປັນຜູ້ນຳເຢຍລະມັນທີ່ອາດຈະບໍ່ໄດ້ແຂງແກ່ນ ແລະ ເດັດຂາດເທົ່າທ່ານ ນາງ ອັງເກລາ ແມເຄິລ.

ເຖິງຢ່າງໃດກໍຕາມ, ພັກຝ່າຍຄ້ານຂອງເຢຍລະມັນ ຫຼື ສະມາຊິກພັກ CDU ບາງສ່ວນ ຍັງຕັ້ງຄຳຖາມເຖິງຜົນງານ ແລະ ມໍລະດົກທີ່ທ່ານ ນາງ ອັງເກລາ ແມເຄິລ ປະໄວ້ ບໍ່ວ່າຈະເປັນການລົ້ມເຫຼວໃນການຢັບຢັ້ງການເກີດສົງຄາມຣັດເຊຍ-ອູແກຣນ, ການຕັດສິນໃຈຢຸດການໃຊ້ພະລັງງານນິວເຄຼຍຂອງເຢຍລະມັນ ລວມທັງການເປີດຊາຍແດນປະເທດຮັບບັນດາຜູ້ລີ້ໄພຄັ້ງໃຫຍ່ໃນປີ 2015 ເຊິ່ງທັງໝົດລ້ວນສ້າງຜົນກະທົບຈຳນວນຫຼາຍຕາມມາ ທັງຕໍ່ເຢຍລະມັນ ລວມທັງວົງກວ້າງໃນປະຊາຄົມໂລກ.

# ອິນເດຍ ກັບ ຣັດເຊຍ ພວມຫາລືກ່ຽວກັບສັນຍາການຄ້າເສລີ



ອີງຕາມການລາຍງານຂ່າວ ໃຫ້ຮູ້ວ່າ: ເມື່ອວັນທີ 17 ເມສານີ້, ສື່ມວນຊົນອັງກິດລາຍງານວ່າ: ອິນເດຍ ກັບ ຣັດເຊຍ ພວມຫາລືກ່ຽວກັບສັນຍາການຄ້າເສລີ ເຊິ່ງຈະລົງເລິກການພົວພັນດ້ານການຄ້າທີ່ໄດ້ຂະຫຍາຍຕົວຢ່າງງອກງາມລະຫວ່າງອິນເດຍ ກັບຣັດເຊຍຕື່ມອີກນັບແຕ່ຣັດເຊຍກັບອູແກຣນເກີດການປະທະກັນ.

ໃນກິດຈະກຳຄັ້ງໜຶ່ງທີ່ຈັດຂຶ້ນຢູ່ນະຄອນຫຼວງນິວແດລີ ປະເທດອິນເດຍ, ທ່ານ ຊຸບຣາມານຢາມ ໄຈຊານກາ ລັດຖະມົນຕີກະຊວງການຕ່າງປະເທດອິນເດຍ ໄດ້ກ່າວວ່າ: ອິນເດຍ ກັບຣັດເຊຍ ກຳລັງບັນລຸຂໍ້ຕົກລົງຕໍ່ "ສັນຍາສະບັບຮ່າງ" ກ່ຽວກັບການຄ້າເສລີ, ສ່ວນທ່ານ ເດນນິສ ມານຕູໂຣຟ ລັດຖະມົນຕີກະຊວງການຄ້າ ແລະ ອຸດສາຫະກຳຣັດເຊຍ ກ່າວວ່າ: ການກະທຳນີ້ຈະຮັບປະກັນການລົງທຶນລະຫວ່າງສອງປະເທດ.

## ເຫັນໄວ້ ໄດ້ຂັດຂວາງ

ວິເສດ ສະແຫວງສຶກສາ

# ເລື່ອງສັ້ນໆ ແລະ ມີຄຸນຄ່າຈາກຫວຽດນາມ

ສອງເລື່ອງຈາກຫວຽດນາມທີ່ຜົມເວົ້າຮອດຢູ່ນີ້ ອ່າວເກົ່າແດ່ ແຕ່ກໍຍັງຄັກ ແລະ ມີຄຸນຄ່າມະຫາສານສໍາລັບບ້ານເຮົາ ຖ້າສາມາດເຮັດໄດ້ຄືເພິ່ນ. ເລື່ອງທີ 1 ນັ້ນ ກ່ຽວກັບນະໂຍບາຍປະຢັດທັດທ່ຽງທີ່ຖືກປະກາດໃຊ້ໃນວັນທີ 11 ກຸມພາ 2015 ສໍາລັບພະນັກງານຂັ້ນສູງໃນຂອບອໍານາດການປົກຄອງຂອງນະຄອນຫຼວງຮ່າໂນ້ຍ. ນະໂຍບາຍທີ່ເວົ້າໃຫ້ຖືກແທ້ ກໍແມ່ນມາດຕະການເພາະມັນເປັນຄໍາສັ່ງຫ້າມທີ່ກວມເອົາສະເພາະພະນັກງານຂັ້ນ "ເທິງໆ" ແລະ ພະນັກງານຫຼັກແຫຼ່ງ ໃນກົງຈັກການປົກຄອງຂອງນະຄອນຫຼວງຮ່າໂນ້ຍ, ຖ້າທຽບກັບບ້ານເຮົາ ກໍແມ່ນອົງການປົກຄອງນະຄອນຫຼວງວຽງຈັນນີ້ລະ. ຄໍາສັ່ງທີ່ວ່ານັ້ນ ມີເປົ້າໝາຍຫ້າມພະນັກງານຂັ້ນສູງ ກໍຄືພະນັກງານຫຼັກແຫຼ່ງທົ່ວໄປໃນຂອບອໍານາດຂອງນະຄອນຫຼວງຮ່າໂນ້ຍ ເດີນທາງໄປເຄື່ອນໄຫວຢູ່ຕ່າງປະເທດຖີ່ ຫຼື ຊໍ້າຊາກເກີນໄປ. ການເດີນທາງເຄື່ອນໄຫວຕ່າງປະເທດທີ່ວ່ານັ້ນ ກວມເອົາການໄປເຮັດວຽກທາງການ, ໄປຮ່ວມກອງປະຊຸມສໍາມະນາ-ຝຶກອົບຮົມ ບໍ່ວ່າຈະໄປດ້ວຍທຶນຂອງທາງການ ກໍຄືທຶນຂອງບໍລິສັດ ຫຼື ຫົວໜ່ວຍທຸລະກິດພາຍໃນ ກໍຄືການໄປເຄື່ອນໄຫວຕາມການເຊີນໂດຍກົງຈາກພາກສ່ວນຕ່າງປະເທດ. ຢູ່ໃນເອກະສານຄໍາສັ່ງຫ້າມດັ່ງກ່າວ ໄດ້ລະບຸວ່າພະນັກງານການນໍາ ແລະ ພະນັກງານຫຼັກແຫຼ່ງຂອງນະຄອນຫຼວງຮ່າໂນ້ຍ ສາມາດອອກໄປເຄື່ອນໄຫວຢູ່ຕ່າງປະເທດບໍ່ເກີນ 2 ຄັ້ງຕໍ່ປີ ແລະ ວຽກທີ່ຈະໄປເຮັດນັ້ນ ຕ້ອງເປັນເລື່ອງທີ່ຈໍາເປັນທີ່ສຸດ. ຂໍຂະຫຍາຍຄວາມຕື່ມບ່ອນທີ່ວ່າຫ້າມໄປເຄື່ອນໄຫວຕ່າງປະເທດແບບ "ຊໍ້າຊາກ" ນັ້ນ ກໍຄືຊໍ້າຊາກເລື່ອງເກົ່າ, ຫົວຂໍ້ເກົ່າໄປແລ້ວໄປອີກ ຈົນບໍ່ມີເວລາຜັນຂະຫຍາຍສິ່ງທີ່ໄດ້ເກັບກໍາມາຈາກຕ່າງປະເທດ. ການໄປເຄື່ອນໄຫວຕ່າງປະເທດແບບບໍ່ມີການຄັດເລືອກ, ບໍ່ມີການຊັ່ງຊາຜົນທີ່ຈະໄດ້ຮັບ ກໍຄືຄວາມສາມາດດ້ານການເງິນ ແລະ ເວລາ (ຄ່າໂດຍສານ, ອາຫານ-ພັກເຊົາ ແລະ ເວລາທີ່ເສຍໄປ) ນັ້ນ ຖືເປັນການສິ້ນເປືອງ ແລະ ຟຸມເຟືອຍທີ່ສຸດ. ເລື່ອງທີ 2 ຈາກຫວຽດນາມ ນັ້ນ ກໍຄືນະໂຍບາຍຫຼຸດຈໍານວນພະນັກງານກິນເງິນເດືອນລັດລົງ ແຕ່ການຫຼຸດດັ່ງກ່າວ ຕ້ອງຮັບປະກັນປະສິດທິພາບ ແລະ ປະສິດທິຜົນທີ່ສູງກວ່າເກົ່າ ໃນການປະຕິບັດໜ້າທີ່ການງານຂອງລັດຖະກອນ ນະໂຍບາຍຫຼຸດຈໍານວນພະນັກງານລັດລົງນີ້ ມີຂຶ້ນໃນສະໄໝທ່ານ ຫງວຽນ ເຕິນ ຢຸງ ເປັນນາຍົກລັດຖະມົນຕີຫວຽດນາມ. ທິດທາງການປະຕິຮູບກົງຈັກລັດຖະກອນດັ່ງກ່າວ ໄດ້ກໍານົດຂັ້ນຕອນດັ່ງຕໍ່ໄປນີ້ຄື: ແຕ່ປີ 2016 ຫາປີ 2021 ຕ້ອງຫຼຸດພະນັກງານລັດລົງໃຫ້ໄດ້ 10% ເພື່ອບັນລຸເປົ້າໝາຍດັ່ງກ່າວ, ບັນດາສໍານັກງານອົງການຂອງລັດຕ້ອງປະຕິບັດດັ່ງຕໍ່ໄປນີ້ຄື: ຕ້ອງການພະນັກງານໃໝ່ໃນແຕ່ລະປີນັ້ນຕ້ອງບໍ່ເກີນເຄິ່ງໜຶ່ງຂອງຈໍານວນພະນັກງານທີ່ເຂົ້າບໍານານໃນປີນັ້ນ. ຍົກຕົວຢ່າງຈັ່ງຊີ້ສະ ຄືສົມມຸດວ່າໃນປີ 2023 ນີ້ມີພະນັກງານເຂົ້າຮັບບໍານານ 700 ຄົນ, ການຮັບພະນັກງານໃໝ່ປະຈໍາປີ 2023 ກໍຕ້ອງ



ບໍ່ໃຫ້ກາຍ 350 ຄົນ. ສ່ວນຢູ່ໂຮງພະຍາບານ ຫຼື ໂຮງຮຽນທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ໆນັ້ນໄດ້ຮັບຂໍ້ຍົກເວັ້ນຄືສາມາດຮັບພະນັກງານໄດ້ໃນຈໍານວນຫຼາຍກວ່າທີ່ໄດ້ກໍານົດໄວ້ສໍາລັບພາກສ່ວນອື່ນໆ ແຕ່ກໍຕ້ອງມີການກວດກາ ແລະ ຄຸ້ມຄອງຢ່າງເຄັ່ງຄັດ. ສ່ວນພະນັກງານລັດໃນຂັ້ນຕາແສງ, ບ້ານ ແລະ ຫົວໜ່ວຍການປົກຄອງຂັ້ນຮາກຖານນັ້ນ ຕ້ອງຄວບຕໍາແໜ່ງຕາມຄວາມຮູ້ຄວາມສາມາດເຊັ່ນ ອາດຈະຄວບວຽກຂາເຂົ້າ-ຂາອອກກັບວຽກຄອມພິວເຕີ ຫຼື ວຽກອື່ນໆ. ການປະຕິຮູບກົງຈັກລັດຖະກອນໃນຫວຽດນາມນີ້ ເລີ່ມຂຶ້ນຢ່າງຈິງຈັງໃນປີ 2015 ນັ້ນແມ່ນເພື່ອຫຼຸດຜ່ອນພາລະແບກຫາບເງິນເດືອນ, ເງິນອຸດໜູນຊີວິດການເປັນຢູ່ຂອງພະນັກງານລັດ ແລະ ເພື່ອການຫັນເປັນທັນສະໄໝ ກະທັດຮັດ ແຕ່ມີປະສິດທິພາບ ແລະ ປະສິດທິຜົນສູງ. ຢູ່ປະເທດລາວພວກເຮົາ ລັດຍັງແບກຫາຍພາລະໃຊ້ຈ່າຍງົບປະມານເງິນເດືອນ ແລະ ເງິນອຸດໜູນຢ່າງໜັກໜ່ວງ ເພາະມີຈໍານວນພະນັກງານລັດຫຼາຍໃນລະດັບແຖວໜ້າຂອງອາຊຽນ ແລະ ຂອງໂລກ ຄືປະມານ 2,8% ຂອງຈໍານວນພົນລະເມືອງໃນທົ່ວປະເທດ.



## ເພື່ອຫຼີກເວັ້ນຄໍາຜິດ

*#ບ່າວກະບື*

ຫຼັງຈາກອັດໂກປີແລ້ວ ບ່າວແອ່ນ ກໍກວດໜັງສືເປັນແຕ່ລະໂຕໄປ ໂດຍເອົາແລໃສ່ກັບຕົ້ນສະບັບ ເພື່ອຊອກເບິ່ງວ່າຢ້ານມີໂຕສະກົດຜິດ.

## TO AVOID MISTAKES

***#BAOKBU***

After taking photocopies, Bao Aen went word by word to compare them with the original for spelling mistakes!



ດື່ມຊອງເມົາ ຕ້ອງພັກຜ່ອນ

• ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນໍາ :**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄໍາວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພຶດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄໍາ ລໍຄໍາສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອໍາພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄໍາຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ